german
cooperation
DEUTSCHE ZUSAMMENARBEIT

Published by:

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

SEAMEO
INNOTECH



ບົດວິໄຈຄົ້ນຄວ້າໃໝ່ຫຼ້າສຸດ

# ການຜັນຂະຫຍາຍວຽກງານ ສົ່ງເສີມສຸຂະພາບດີໃນໂຮງຮຽນ

## ປະສົບການຈາກເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ

FIT FOR SCHOOL



# ສາລະບານ


ສະພາບລວມ 3

1. ຂໍ້ສະດວກທາງດ້ານນະໂຍບາຍທີ່ໃຫ້ການສະໜັບສະໜູນ 6

2. ສົ່ງເສີມການປຸນລະດົມໂຄສະນາ ແລະ ການແບ່ງປັນບົດຮຽນ 10

3. ສ້າງຄວາມຕ້ອງການຢາກເສີມຜັນຂະຫຍາຍ ແລະ ໃຫ້ການຊ່ວຍເຫຼືອສະໜັບສະໜູນທີ່ເໝາະສົມ 14

4. ສ້າງຕົວແບບຕາມແນວທາງ FIT 18

5. ປຸກລະດົມຊຸມຊົນມີສ່ວນຮ່ວມສະໜັບສະໜູນ 22

6. ບ່ອນອ້າງອີງ 26

# ສະພາບລວມ

## ຄວາມສາມາດຜັນຂະຫຍາຍໄດ້ຂອງວຽກງານສຸຂະພາບດີໃນໂຮງຮຽນ

"ຄຳຖາມໃນປັດຈຸບັນນີ້ບໍ່ແມ່ນວ່າວຽກງານສົ່ງເສີມສຸຂະພາບໃນໂຮງຮຽນແມ່ນສິ່ງຈຳເປັນຫຼືບໍ່... ແຕ່ຄຳຖາມມີຢູ່ວ່າຈະປະຕິບັດວຽກງານດັ່ງກ່າວໃຫ້ທົ່ວເຖິງໄດ້ແນວໃດ? ນີ້ແມ່ນສິ່ງທ້າທາຍທີ່ພວກເຮົາກຳລັງປະເຊີນຢູ່", (Bundy, 2011,p. xiv)ຄຳເວົ້ານີ້ສະທ້ອນເຖິງບັນຫາສຳຄັນຂອງວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ (WinS), ໂດຍສະເພາະແມ່ນໃນບັນດາປະເທດທີ່ມີຊັບພະຍາກອນຍັງຈຳກັດ. ປົກກະຕິແລ້ວການຈັດຕັ້ງປະຕິບັດທີ່ມີຜົນດີສາມາດສ້າງຂຶ້ນໄດ້ແຕ່ຜົນໄດ້ຮັບຍັງຈຳກັດຖ້າຫາກວ່າກິດຈະກຳດັ່ງກ່າວບໍ່ມີຄວາມຍືນຍົງ ແລະ ບໍ່ສາມາດຜັນຂະຫຍາຍໄດ້ດ້ວຍພາກລັດ. ສະນັ້ນ, ໃນປັດຈຸບັນ ການຜັນຂະຫຍາຍກິດຈະກຳຈຶ່ງກາຍເປັນວາລະສຳຄັນຂອງບັນດາຄູ່ຮ່ວມພັດທະນາທີ່ສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ. ເພື່ອເສີມສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ. ວຽກງານສົ່ງເສີມສຸຂະພາບໃນໂຮງຮຽນແບບກະທັດຮັດ, ສາມາດຜັນຂະຫຍາຍໄດ້, ມີຄວາມຍືນຍົງ ແລະ ເຊື່ອມສານເຂົ້າໃນລະບົບການເຮັດວຽກຂອງພາກລັດ. ໃນປັດຈຸບັນໄດ້ກາຍເປັນເງື່ອນໄຂທີ່ຕ້ອງພິຈາລະນາກ່ອນການເລີ່ມຕົ້ນກິດຈະກຳ.

ການອອກແບບກິດຈະກຳຕ້ອງກະທັດຮັດ ແລະ ສະໜອງການເປັນຕົວແບບໄດ້ ເພື່ອສາມາດເຊື່ອມສານເຂົ້າໃນລະບົບການເຮັດວຽກຂອງກະຊວງສຶກສາທິການ ແລະ ກິລາ ທີ່ມີຢູ່ແລ້ວ ເຮັດໃຫ້ພາກສ່ວນກ່ຽວຂ້ອງສາມາດນຳເອົາບົດຮຽນໄປນຳໃຊ້ໄດ້.

ການອອກແບບກິດຈະກຳແບບກະທັດຮັດ ແລະ ສະໜອງການເປັນຕົວແບບໄດ້ ເພື່ອສາມາດເຊື່ອມສານເຂົ້າໃນລະບົບການ ເຮັດວຽກຂອງກະຊວງສຶກສາທິການ ແລະ ກິລາທີ່ມີຢູ່ແລ້ວ ເຮັດໃຫ້ພາກສ່ວນກ່ຽວຂ້ອງສາມາດນຳເອົາບົດຮຽນໄປນຳໃຊ້ໄດ້. ນຳສະເໜີວິທີແກ້ໄຂບັນຫາທີ່ເໝາະສົມ ແລະ ມີຄ່າໃຊ້ຈ່າຍທີ່ບໍ່ແພງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດມີຜົນສຳເລັດເຖິງແມ່ນວ່າຈະຢູ່ໃນເຂດທີ່ມີຊັບພະຍາກອນຈຳກັດກໍຕາມ. ນຳໃຊ້ໂຄງຮ່າງ ການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກຂອງພາກລັດເພື່ອສ້າງຄວາມເຂັ້ມແຂງ ແລະ ຮັບປະກັນຄວາມຍືນຍົງ.

## ຫຼັກການພື້ນຖານຂອງວຽກງານສຸຂະພາບດີໃນໂຮງຮຽນ ແລະ ວຽກງານສຸຂະພາບດີໃນໂຮງຮຽນລະດັບພາກພື້ນ

ວຽກງານສຸຂະພາບດີໃນໂຮງຮຽນແນໃສ່ແກ້ໄຂບັນຫາທີ່ກ່າວມາ ຄວາມສາມາດໃນການຜັນຂະຫຍາຍແມ່ນໜຶ່ງໃນຫຼັກການພື້ນຖານຂອງວຽກງານນີ້. ດ້ວຍການຮັບຮູ້ເຖິງຄວາມຈຳເປັນຕ້ອງໄດ້ແກ້ໄຂບັນຫາພະຍາດຕິດຕໍ່ທີ່ກ່ຽວຂ້ອງກັບການຂາດອະນາໄມ ເຊັ່ນ: ການຕິດເຊື້ອແມ່ທ້ອງໃນລຳໄສ້, ພະຍາດຖອກທ້ອງ ແລະ ບັນຫາແຂ້ວແມງໃນບັນດາເດັກນ້ອຍເກນອາຍຸເຂົ້າຮຽນໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້, ແນວທາງນີ້ໄດ້ຮັບການພັດທະນາຂຶ້ນທີ່ປະເທດຟີລິບປິນ ໂດຍກະຊວງສຶກສາທິການເຊິ່ງໄດ້ຮັບການສະໜັບສະໜູນຈາກການຮ່ວມມືເພື່ອພັດທະນາຂອງປະເທດ ເຢຍລະມັນ. ແນວທາງນີ້ແມ່ນດຳເນີນຕາມຫຼັກການພື້ນຖານ ສຳຄັນຄື ງ່າຍກະທັດຮັດ, ຜັນຂະຫຍາຍໄດ້, ມີຄວາມຍືນຍົງ ແລະ ເປັນລະບົບ. ມີຈຸດປະສົງເພື່ອ ຫັນປ່ຽນໂຮງຮຽນປະຖົມພາກລັດໃຫ້ກາຍເປັນສະຖານທີ່ ທີ່ເໝາະສົມກັບການຮຽນຮູ້, ເປັນບ່ອນທີ່ເດັກນ້ອຍສາມາດຮຽນຮູ້, ຝຶກນິໄສຮັກຄວາມສະອາດ ແລະ ຈະເລີນເຕີບໂຕ. ວຽກງານສຸຂະພາບດີໃນໂຮງຮຽນຍັງສົ່ງເສີມວິທີການພັດທະນາເທື່ອລະກ້າວເພື່ອໃຫ້ໂຮງຮຽນສາມາດພັດທະນາໂດຍອີງໃສ່ຊັບພະຍາກອນທີ່ມີຢູ່, ຕາມສະພາບແວດລ້ອມ ແລະ ຂີດຄວາມສາມາດຂອງຕົນເອງ. ນອກຈາກປັບປຸງສະພາບແວດລ້ອມຂອງໂຮງຮຽນແລ້ວ, ການປະຕິບັດກິດຈະກຳຮັກສາສຸຂະອະນາໄມທຸກວັນ ເຊັ່ນ: ການຖູແຂ້ວດ້ວຍຢາຖູແຂ້ວ ທີ່ມີຟລູໂອໄຣດ໌,ການລ້າງມືໃສ່ສະບູແລະ ການກິນຢາຂ້າແມ່ທ້ອງສອງຄັ້ງຕໍ່ປີໄດ້ກາຍເປັນກິດຈະກຳປົກກະຕິຂອງໂຮງຮຽນ. ກິດຈະກຳເຫຼົ່ານີ້ແມ່ນກະທັດຮັດ,ຄຸ້ມຄ່າຕໍ່ການລົງທຶນ,ມີຂໍ້ມູນຢັ້ງຢືນຜົນໄດ້ຮັບສູງ ແລະ ສາມາດຜັນຂະຫຍາຍໄດ້ໃນເຂດທີ່ມີຊັບພະຍາກອນຈຳກັດ. ສຳລັບ ຂໍ້ມູນເພີ່ມເຕີມເບິ່ງໃນເວັບໄຊທ໌ : www. fitforschool.international.

ໃນປີ 2011, Deutsche Gesellschaft fur Internationale Zusammenarbeit (GIZ) GmbH, ດ້ວຍການ ຮ່ວມມືກັບ ອົງການ ຊີເມວໂອ ອິນໂນເທັກ Southeast Asian Ministers of Education Organization Regional Center For Educational Innovation and Technology (SEAMEO INNO -TECH), ໂດຍໄດ້ຮັບມອບໝາຍຈາກກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາຂອງລັດຖະບານເຢຍລະມັນ (BMZ) ເພື່ອສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ, ກຳປູເຈຍ, ອິນໂດເນເຊຍ ແລະ ຟີລິບປິນ ໃນການປະຕິບັດວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ.

# ໄລຍະເວລາການຜັນຂະຫຍາຍກິດຈະກຳຂອງເມືອງສີສັດຕະນາກ




ສປປ ລາວ ເລີ່ມຕົ້ນປະຕິບັດວຽກງານສຸຂະພາບດີໃນໂຮງຮຽນ ໃນປີ 2011.
ມີ 22 ໂຮງຮຽນໃນ 4 ເມືອງຂອງນະຄອນຫຼວງວຽງຈັນໄດ້ຖືກຄັດເລືອກເພື່ອທົດລອງສ້າງເປັນຕົວແບບໃນການປັບປຸງ ສະພາບນໍ້າ-ສຸຂະພິບານ ແລະ ກິດຈະກຳອະນາໄມປະຈຳວັນຂອງໂຮງຮຽນ. ໃນນັ້ນ 5 ໂຮງຮຽນແມ່ນຢູ່ເມືອງສີສັດຕະນາກ. ປີ 2014 ຫ້ອງການສຶກສາທິການ ແລະ ກິລາ ເມືອງສີສັດຕະນາກສາມາດຜັນຂະຫຍາຍກິດຈະກຳໄປໄດ້ເກືອບທຸກໂຮງຮຽນໃນເມືອງຂອງຕົນ, ເຊິ່ງກວມເອົາ 22 ໂຮງຮຽນປະຖົມພາກລັດ ແລະ 17 ໂຮງຮຽນປະຖົມພາກເອກະຊົນດ້ວຍການເປັນເຈົ້າການຂອງເຂົາເຈົ້າເອງ.

ຈາກເດືອນເມສາ-ມິຖຸນາ ປີ 2015, ຄະນະຮ່ວມລະຫວ່າງກົມອະນຸບານ ແລະ ປະຖົມສຶກສາ, ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ, ອົງການຊີເມວໂອ ອິນໂນເຕັກ(SEAMEO INNOTECH) ແລະ ອົງການ ຈີໄອແຊັດ(GIZ) ໄດ້ດຳເນີນການສຶກສາກໍລະນີການຜັນຂະຫຍາຍກິດຈະກຳໃນເມືອງ ສີສັດຕະນາກ ບັນທຶກບົດຮຽນທີ່ຄົ້ນພົບ. ກໍລະນີສຶກສານີ້ ມີຈຸດປະສົງສະເໜີໃຫ້ກະຊວງສຶກສາທິການ ແລະ ກິລາ ລວມທັງ ບັນດາຄູ່ຮ່ວມພັດທະນາທີ່ກຳລັງຊ່ວຍເຫຼືອດ້ານນໍ້າ- ສຸຂະພິບານໃນໂຮງຮຽນ ເພື່ອເປັນທິດທາງໃນການສະໜັບສະໜູນຂະບວນການຜັນຂະຫຍາຍກິດຈະກຳໄປສູ່ເມືອງ ແລະ ແຂວງ ອື່ນໆ ຂອງ ສປປ ລາວ.

## ການບັນທຶກຄວາມສາມາດຜັນຂະຫຍາຍໄດ້ຂອງວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ

ການສຶກສາຄົ້ນຄ້ວາມີຈຸດປະສົງເພື່ອອະທິບາຍເຖິງວິທີການທີ່ເມືອງ ສີສັດຕະນາກນຳໃຊ້ເພື່ອຜັນຂະຫຍາຍກິດຈະກຳສຸຂະພາບດີໃນໂຮງຮຽນໄປສູ່ທຸກໂຮງຮຽນປະຖົມໃນຂອບເຂດຮັບຜິດຊອບຂອງຕົນ. ການສຶກສາຄົ້ນຄວ້າສຸມໃສ່ການວິເຄາະໂຄງສ້າງ, ຂັ້ນຕອນ ແລະ ກົນໄກທີ່ພາໃຫ້ເກີດມີຜົນສຳເລັດໃນການຜັນຂະຫຍາຍກິດຈະກຳດ້ວຍຊັບພະຍາກອນທີ່ມີຈຳກັດ ແລະ ມີການສະໜັບສະໜູນຈາກພາຍນອກພຽງເລັກໜ້ອຍ. ໂດຍສະເພາະແລ້ວການວິໄຈຄົ້ນຄວ້າແມ່ນແນໃສ່ຄຳຖາມດັ່ງຕໍ່ໄປນີ້:

- ເມືອງສີສັດຕະນາກມີວິທີການແນວໃດໃນການຜັນຂະຫຍາຍ ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ?
  ເນັ້ນໃສ່ພາລະບົດບາດ, ຄວາມສາມາດຂອງພາກສ່ວນກ່ຽວຂ້ອງ, ຂັ້ນຕອນການຈັດຕັ້ງປະຕິບັດຢູ່ຂັ້ນເມືອງ ແລະ ຂັ້ນໂຮງຮຽນ ກໍຄືກົນໄກການປະສານງານ ລະຫວ່າງສອງຂັ້ນດັ່ງກ່າວ
- ມີປັດໃຈສຳຄັນຫຍັງແດ່ທີ່ສົ່ງຜົນຕໍ່ຂັ້ນຕອນການຜັນຂະຫຍາຍກິດຈະກຳ?
  ເນັ້ນໃສ່ບັນດາປັດໃຈເອື້ອອຳນວຍ ແລະ ສະໜັບສະໜູນກໍຄືປັດໃຈທີ່ເປັນອຸປະສັກ
- ມີວິທີການແນວໃດເພື່ອນຳໃຊ້ບົດຮຽນດັ່ງກ່າວເຂົ້າໃນການຜັນຂະຫຍາຍກິດຈະກຳໃນ ສປປ ລາວໃນອະນາຄົດ?
  ເນັ້ນໃສ່ວິທີການສັງລວມ, ແບ່ງປັນບົດຮຽນ, ປະສົບການໃນການຈັດຕັ້ງປະຕິບັດທີ່ເໝາະສົມ ແລະ ມີປະສິດທິພາບທີ່ສຸດ

ໄດ້ດຳເນີນການສົນທະນາກັບຜູ້ໃຫ້ຂໍ້ມູນສຳຄັນ ແລະ ສຳພາດກຸ່ມກັບພາກສ່ວນກ່ຽວຂ້ອງຈາກ 4 ຂັ້ນຂອງກະຊວງສຶກສາທິການ ແລະ ກິລາ (ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ໂຮງຮຽນ)ໃນຊ່ວງເດືອນເມສາ-ພຶດສະພາ 2015. ນອກຈາກນີ້ ຍັງໄດ້ ລົງຢ້ຽມຢາມໂຮງຮຽນ ແລະ ສຶກສາເອກະສານເພີ່ມຕື່ມເພື່ອເປັນຂໍ້ມູນໃຫ້ການຄົ້ນຄວ້າ. ຜົນການຄົ້ນຄວ້າໄດ້ແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງເພື່ອກວດສອບຄວາມຖືກຕ້ອງ.

# ປະສົບການ ການຜັນຂະຫຍາຍ ກິດຈະກໍາຂອງເມືອງສີສັດຕະນາກ

ການນໍາຂອງກະຊວງສຶກສາທິການ ແລະ ກິລາ ທຸກຂັ້ນ ຈາກຂັ້ນສູນກາງ, ແຂວງ, ເມືອງ, ໂຮງຮຽນ ແລະ ຊຸມຊົນລ້ວນແຕ່ໄດ້ ປະກອບສ່ວນໃນການຜັນຂະຫຍາຍກິດຈະກໍາສຸຂະພາບດີໃນໂຮງຮຽນ ຢູ່ເມືອງສີສັດຕະນາກ. ແຕ່ລະຂັ້ນມີການຮ່ວມມືລະຫ່ວາງຂະແໜງ ການສາທາລະນະສຸກຢ່າງແໜ້ນແຟ້ນເຊິ່ງສະໜັບສະໜູນການປະຕິບັດ ວຽກງານສຸຂະພາບດີໃນໂຮງຮຽນ ຢູ່ ສປປ ລາວ. ໃນພາກຕໍ່ໄປມີການ ອະທິບາຍເຖິງໂຄງຮ່າງ, ຂັ້ນຕອນ, ປັດໃຈເອື້ອອໍານວຍ ແລະ ສິ່ງທີ່ເປັນ ອຸປະສັກຕໍ່ການຜັນຂະຫຍາຍກິດຈະກໍາໃນເມືອງ ສີສັດຕະນາກ.

ເມືອງສີສັດຕະນາກເປັນເມືອງໜຶ່ງຂອງນະຄອນຫຼວງວຽງ ຈັນທີ່ມີສະພາບດ້ານເສດຖະກິດ-ສັງຄົມທີ່ກ້າວໜ້າ ຖ້າທຽບກັບເຂດ ແລະ ເມືອງອື່ນໆໃນ ສປປ ລາວ. ທີ່ຕັ້ງຂອງເມືອງຢູ່ໃກ້ກັບສູນກາງ ເປັນຂໍ້ສະດວກໃນການທົດລອງໂຄງການໄລຍະທີ່ໜຶ່ງ(2011-2015) ເຊິ່ງໂຄງການໄລຍະທີ່ໜຶ່ງແມ່ນເພື່ອຖອດຖອນບົດຮຽນ, ສ້າງຕົວແບບ ໃນການຈັດຕັ້ງປະຕິບັດ ແລະ ເພື່ອປັບປຸງສື່-ອຸປະກອນໃຫ້ແທດເໝາະ ກັບສະພາບທ້ອງຖິ່ນຂອງລາວ. ດ້ວຍຕົວແບບ ແລະ ສື່-ອຸປະກອນ ທີ່ດີກິດຈະກໍາສາມາດຜັນຂະຫຍາຍໄປສູ່ເຂດຫ່າງໄກສອກຫຼີກຂອງ ປະເທດ. ບົດຮຽນຈາກເມືອງສີສັດຕະນາກຖືວ່າເປັນບົດຮຽນທີ່ດີ ສໍາລັບການຜັນຂະຫຍາຍໄປສູ່ເມືອງອື່ນໆທີ່ຕ້ອງການ, ຍ້ອນວ່າສາມາດ ຮຽນຮູ້ວິທີຈັດຕັ້ງປະຕິບັດ ເຊັ່ນ: ການຄຸ້ມຄອງບໍລິຫານຂອງຂັ້ນເມືອງ, ການບໍລິຫານໂຮງຮຽນໂດຍອີງໃສ່ພື້ນຖານຂອງໂຮງຮຽນ ດ້ວຍການ ນໍາໃຊ້ຕົວຢ່າງຈາກການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ກິດຈະກໍາ.

**ຄວາມຈິງ**

**ເມືອງສີສັດຕະນາກ**

**ປະຊາກອນ: 78,088**
**ຈໍານວນບ້ານ: 37**
**ຈໍານວນໂຮງຮຽນປະຖົມສົມບູນ: 41**
**ຈໍານວນ ກຸ່ມໂຮງຮຽນ: 3**
**ຈໍານວນ ນັກຮຽນ ຊັ້ນປະຖົມສຶກສາ: 5,657**
**ຈໍານວນ ຄູອາຈານ ຊັ້ນປະຖົມສຶກສາ: 275**
**ອັດຕາເຂົ້າຮຽນລວມ: 105,85%**
**ອັດຕາການປະລະການຮຽນ (ປີ1): 1.9%**
**ອັດຕາການຈົບຊັ້ນປະຖົມສຶກສາ: 92.9%**
**ເນື້ອທີ່ດິນ: 31,000 ກມ2**



# 1. ສະພາບແວດລ້ອມດ້ານນະໂຍບາຍທີ່ສະໜັບສະໜູນ



## ຜູ້ມີບົດບາດສຳຄັນ: ຂັ້ນສູນກາງ ກົມອະນຸບານ ແລະ ປະຖົມສຶກສາ

ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນຂອງ ສປປ ລາວ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກົມອະນຸບານ ແລະ ປະຖົມສຶກສາກະຊວງສຶກສາທິການ ແລະ ກິລາ. ກົມອະນຸບານ ແລະ ປະຖົມສຶກສາ ເປັນຜູ້ໃຫ້ທິດຊີ້ນຳລວມໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ ເຊັ່ນ: ວຽກງານສຸຂະພາບດີໃນໂຮງຮຽນໂດຍຜ່ານໜ່ວຍງານສົ່ງເສີມສຸຂະພາບໃນໂຮງຮຽນ. ໜ່ວຍງານສົ່ງເສີມສຸຂະພາບໃນໂຮງຮຽນແມ່ນເປັນຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບຂອງໂຮງຮຽນໃນກະຊວງສຶກສາທິການ ແລະ ກິລາ ປະກອບດ້ວຍຂະແໜງການສຶກສາ ແລະ ສາທາ. ສ່ວນຫຼາຍແມ່ນຮອງຫົວໜ້າ ແລະ ພະນັກງານວິຊາການໂດຍອີງຕາມຂໍ້ຕົກລົງແຕ່ງຕັ້ງ. ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນໂຄງຮ່າງຄະນະຊີ້ນຳວຽກງານສົ່ງເສີມສຸຂະພາບໃນໂຮງຮຽນຂອງ ສປປ ລາວ.




ໂຄງຮ່າງຄະນະຊີ້ນຳວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ ແຕ່ລະຂັ້ນ

## ຍຸດທະສາດການຜັນຂະຫຍາຍ: ສອດຄ່ອງກັບແນວທາງແຫ່ງຊາດ

ສປປ ລາວ ໄດ້ພັດທະນານະໂຍບາຍທີ່ດີເຊັ່ນ: 1). ນະໂຍບາຍແຫ່ງຊາດວ່າດ້ວຍວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ 2). ມາດຖານຄຸນນະພາບການສຶກສາ ເຊິ່ງເປັນບ່ອນອີງໃຫ້ແກ່ການປະຕິບັດວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນໃນປະເທດ.
ສະພາບແວດລ້ອມດ້ານນະໂຍບາຍ ແລະ ທິດທາງລວມເປັນປັດໃຈໜຶ່ງທີ່ສະໜັບສະໜູນການຜັນຂະຫຍາຍ
ກິດຈະກຳໃນເມືອງສີສັດຕະນາກ, ຕາມຄຳເຫັນຂອງກົມອະນຸບານ ແລະ ປະຖົມສຶກສາ ວຽກງານສຸຂະພາບດີໃນໂຮງຮຽນສອດຄ່ອງກັບແນວທາງຂອງລັດຖະບານ ແລະ ການບໍລິຫານວຽກງານນີ້ຊ່ວຍໃຫ້ໂຄງຮ່າງການຈັດຕັ້ງທີ່ມີຢູ່ ເຊັ່ນ: ໜ່ວຍງານສົ່ງເສີມສຸຂະພາບ ໄດ້ຈັດຕັ້ງນະໂຍບາຍທີ່ວາງໄວ້ ໂດຍການຜັນຂະຫຍາຍກິດຈະກຳເຫຼົ່ານີ້. ເຖິງແມ່ນວ່າເປັນນະໂຍບາຍລວມ ແຕ່ພະນັກງານຂະແໜງການສຶກສາ, ສາທາທຸກລະດັບ ເຂົ້າໃຈ ແລະ ເຊື່ອມຊຶມນະໂຍບາຍດັ່ງກ່າວ ແລະ ສາມາດຜັນຂະຫຍາຍໄດ້ໃນລະດັບທ້ອງຖິ່ນ, ໂດຍໄດ້ຮັບການຊີ້ນຳຢ່າງໃກ້ຊິດຈາກສູນກາງກໍສາມາດຄຸ້ມຄອງວຽກງານ
ສົ່ງເສີມສຸຂະພາບດີໃນໂຮງຮຽນ ໄດ້.



ການປະຕິບັດວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ໄດ້ຮັບການສົ່ງເສີມຈາກການນຳຂັ້ນສູນກາງ. ກົມອະນຸບານ ແລະ ປະຖົມສຶກສາໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການ ປຸກລະດົມໂຄສະນາໃຫ້ພາກສ່ວນກ່ຽວຂ້ອງພາຍໃນກະຊວງ ສຶກສາທິການ ແລະ ກິລາ. ກົມອະນຸບານ ແລະ ປະຖົມສຶກສາໄດ້ດຳເນີນວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ໄລຍະທີ່ໜຶ່ງໃນປີ (2011-2015)ເຊິ່ງເປັນໄລຍະ ສຶກສາຄົ້ນຄວ້າ ຢູ່ນະຄອນຫຼວງ ວຽງຈັນ. ເນື່ອງຈາກວ່າມີເງື່ອນໄຂສະດວກໃນການລົງຕິດຕາມ ແລະ ໃຫ້ຄຳແນະນຳເພື່ອສ້າງຕົວແບບອັນດີ ພ້ອມທັງຮຽນຮູ້ເອົາປະສົບການຈາກການປະຕິບັດຕົວຈິງ ກຽມພ້ອມທີ່ຈະນຳໄປທົດລອງບ່ອນ
ທີ່ມີ ເງື່ອນໄຂທີ່ທ້າຍທາຍກວ່າໃນອະນາຄົດ.
ໜ່ວຍງານສົ່ງເສີມສຸຂະ
ພາບຂັ້ນສູນກາງໄດ້ລະດົມຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ  ໃຫ້ເລີ່ມຕົ້ນຈາກບາດກ້າວນ້ອຍໆ  ແລະ ຂະຫຍາຍ ອອກເທື່ອລະກ້າວ. ກົມອະນຸບານ ແລະ ປະຖົມສຶກສາຮັບຮູ້ ກະຊວງມີງົບປະມານຈຳກັດ ແລະ ສາມາດຊ່ວຍເຫຼືອ ເມືອງ ຫຼື ໂຮງຮຽນໄດ້ພຽງເລັກໜ້ອຍ ສະນັ້ນ, ການທົດລອງວິທີການ ທີ່ປະຢັດນີ້ຈຶ່ງເປັນທາງເລືອກທີ່ເໝາະສົມໃນເວລານັ້ນ. ກົມອະນຸບານ ແລະ ປະຖົມສຶກສາໄດ້ເນັ້ນໜັກວ່າ ເມືອງສາມາດ ທົດລອງໂຄງການເລີ່ມຈາກໜຶ່ງໂຮງຮຽນ. ພາຍຫຼັງທີ່ເມືອງ ສ້າງໂຮງຮຽນຕົວແບບໄດ້ແລ້ວ ຈຶ່ງເຊີນຊວນໃຫ້ໂຮງຮຽນອື່ນ ໄປຢ້ຽມຢາມໂຮງຮຽນດັ່ງກ່າວເພື່ອສ້າງ ໂອກາດໃຫ້ມີການ ແລກປ່ຽນບົດຮຽນນຳກັນ. ການແລກປ່ຽນບົດຮຽນ ກັບສາກົນ ກໍເປັນສ່ວນໜຶ່ງໃນການກະຕຸກຊຸກຍູ້ພາກສ່ວນກ່ຽວຂ້ອງໃຫ້ປະຕິບັດ ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ຍ້ອນເຫັນວ່າຕົນເອງ  ເປັນ ສ່ວນໜຶ່ງຂອງຂະບວນການໃນສາກົນ. ເຂົາເຈົ້າເກີດມີແນວຄວາມຄິດໃໝ່ໆໃນເວລາຖອດ
ຖອນບົດຮຽນ ແລະ ເຫັນໄດ້ວ່າ
ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ແມ່ນສາມາດຈັດຕັ້ງ ປະຕິບັດໄດ້ຈິງ ເຖິງແມ່ນວ່າມີຊັບພະຍາກອນ ຈຳກັດກໍຕາມ ດ້ວຍການ ເລີ່ມຕົ້ນຈາກບາດກ້າວນ້ອຍໆ, ຫຼັງຈາກນັ້ນຈຶ່ງຜັນຂະຫຍາຍໃຫ້ກ້ວາງ ອອກ ແລະ ປັບປຸງເທື່ອລະກ້າວ ອີງໃສ່ບັນຫາດ້ານສຸຂະພາບ ແລະ ສະພາບທົ່ວໄປທີ່ມີຢູ່ໃນ ຊຸມຊົນ ແລະ ໂຮງຮຽນ. ອີກດ້ານໜຶ່ງ ກະຊວງສຶກສາທິການ ແລະ ກິລາ ຍັງເຫັນວ່າ ຖ້າຂາດ ຜູ້ຮັບຜິດຊອບ ວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ຂາດການແບ່ງພາລະບົດບາດ ແລະ ໜ້າທີ່ ຢ່າງຈະແຈ້ງ ຈະເປັນອຸປະສັກຕໍ່ການຜັນຂະຫຍາຍ ວຽກງານໄດ້.

.

## ປັດໃຈສຳຄັນ: ສະຫຼຸບບົດຮຽນພື້ນຖານໂດຍຫຍໍ້

- ມີສະພາບແວດລ້ອມດ້ານນະໂຍບາຍທີ່ເອື້ອອຳນວຍ
- ມີການກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບ ຢ່າງຈະແຈ້ງໃນທຸກລະດັບ
- ມີພະນັກງານລັດທີ່ສະໜັບສະໜູນໃນທຸກລະດັບ
- ເລີ່ມຈາກບາດກ້າວນ້ອຍໆ  ແລະ ນຳໃຊ້ ວິທີການ ກ້າວໄປເທື່ອລະຂັ້ນ
- ສາມາດລົງໃກ້ຊິດຕິດແທດໂຮງຮຽນຕົວແບບໃນໄລຍະ ທົດລອງກິດຈະກຳ
- ມີຕົວຢ່າງທີ່ດີ ແລະ ມີການແລກປ່ຽນບົດຮຽນດ້ວຍ ການຢ້ຽມຢາມໂຮງຮຽນ "ເຫັນຕົວຈິງ,ຈຶ່ງເຊື່ອ"

# ປະສົບການ




**ດຣ. ມີທອງ ສຸວັນວິໄຊ //** ຫົວໜ້າກົມ ອະນຸບານ ແລະ ປະຖົມສຶກສາ, ກະຊວງສຶກສາທິການ ແລະ ກິລາ

**"ລາວເຮົາມີຄຳສຸພາສິດວ່າ 'ສິບປາກເວົ້າ ບໍ່ເທົ່າຕາເຫັນ'. ພະນັກງານທີ່ໄດ້ເຂົ້າຮ່ວມການແລກປ່ຽນບົດຮຽນລະດັບພາກພື້ນ ຫຼື ໄດ້ລົງຢ້ຽມຢາມໂຮງຮຽນສາມາດເປັນຄູເຝິກໄດ້ດີກວ່າເພາະວ່າເຂົາເຈົ້າບໍ່ພຽງແຕ່ໄດ້ອ່ານເອກະສານເທົ່ານັ້ນແຕ່ຍັງມີປະສົບການຕົວຈິງ ແລະ ໄດ້ເຫັນໂຮງຮຽນຈັດຕັ້ງປະຕິບັດກິດຈະກຳຄືແນວໃດ."**

# 2. ສົ່ງເສີມການແບ່ງປັນຄວາມຮູ້ ແລະ ປຸກລະດົມໂຄສະນາ



## ຜູ້ມີບົດບາດສຳຄັນ: ພະແນກສຶກສາທິການ ແລະ ກິລາ ແຂວງ

ເມືອງສີສັດຕະນາກແມ່ນຂຶ້ນກັບພະແນກ ສຶກສາທິການ ແລະ ກິລານະຄອນຫຼວງວຽງຈັນ. ພະແນກ ສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຮັບຜິດຊອບ 9 ເມືອງ ໂດຍມີ ໂຮງຮຽນປະຖົມ ທັງຫມົດ 512 ແຫ່ງ, ມີນັກຮຽນ 72,362 ຄົນ (ຂໍ້ມູນ: ພະແນກ ສຶກສາທິການ ແລະ ກິລາ, ນະຄອນຫຼວງວຽງຈັນ, ສົກຮຽນ 2014 - 2015).

ເຊັ່ນດຽວກັນກັບໂຄງຮ່າງການຈັດຕັ້ງຂັ້ນສູນກາງ, ວຽກງານສົ່ງເສີມສຸຂະພາບໃນໂຮງຮຽນແມ່ນຂຶ້ນກັບຂະແໜງການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ. ຂັ້ນແຂວງແຕ່ງຕັ້ງພະນັກງານຂອງຕົນໃຫ້ເປັນຜູ້ຮັບຜິດ ຊອບວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ. ຜູ່ຮັບຜິດຊອບມີໜ້າທີ່ດຳເນີນກອງປະຊຸມເຜີຍແຜ່, ໃຫ້ຄຳ
ແນະນຳ ແລະ ຕິດຕາມກວດກາຂັ້ນເມືອງ ແລະ ຂັ້ນໂຮງຮຽນ.

## ຍຸດທະສາດ ການຜັນຂະຫຍາຍກິດຈະກຳ: ການຊີ້ແຈງ ແລະ ການເຜີຍແຜ່

ໃນເບື້ອງຕົ້ນເພື່ອເປັນການສະເໜີໂດຍຫຍໍ້ກ່ຽວກັບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ ຂັ້ນແຂວງດຳເນີນການຊີ້ແຈງໃຫ້ຂັ້ນເມືອງ. ຜູ່ປະສານງານຂັ້ນ
ເມືອງໃຫ້ສຳພາດວ່າ: ລາວເຂົ້າໃຈວຽກງານນີ້ຍ້ອນການສຶກສາເອກະສານ ໂດຍສະເພາະແມ່ນ ຄູ່ມື ສຳລັບ ໂຮງຮຽນ-ຊຸມຊົນ ແລະ ເບິ່ງວີດີໂອ ກ່ຽວກັບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ. ທີມງານຍັງຈັດແບ່ງໜ້າທີ່ຮັບຜິດຊອບໃນເວລາ
ເຜີຍແຜ່. ຕົວຢ່າງຄະນະຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງເປັນຜູ່ກ່າວເປີດກອງປະຊຸມຫຼັງຈາກນັ້ນ, ພະນັກງານ ວິຊາການ ຫຼື ຜູ່ຮັບຜິດຊອບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ ເປັນຜູ້ດຳເນີນການຊີ້ແຈງ.

ການຊີ້ແຈງໜ່ວຍງານຂັ້ນແຂວງໄດ້ສາຍວີດີໂອ ຂອງວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ ແລະ ແຈກຢາຍປຶ້ມຄູ່ມື. ວີດີໂອໄດ້ຮັບຄວາມນິຍົມເປັນ
ຢ່າງດີຈາກຜູ້ເຂົ້າຮ່ວມ ຍ້ອນວ່າເຂົາເຈົ້າສາມາດເຫັນ ແລະ ເຂົ້າໃຈວິທີການຈັດຕັ້ງປະຕິບັດກິດຈະກຳ. ສ່ວນຫຼາຍແລ້ວຫຼັງຈາກທີ່ໄດ້ເບິ່ງວີດີໂອຜູ່ເຂົ້າຮ່ວມມີຄວາມສົນໃຈຢາກຊອກຮູ້ລາຍລະອຽດເພີ່ມຕື່ມກ່ຽວກັບວິທີການຈັດຕັ້ງປະຕິບັດວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ.

ໃນເບື້ອງຕົ້ນ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ ໄດ້ເລີ່ມທົດລອງສ້າງໂຮງຮຽນຕົວແບບ ໃນ 4 ຕົວເມືອງ ເມື່ອຮູ້ເຖິງຄວາມສາມາດໃນການຜັນຂະຫຍາຍກິດຈະກຳຢູ່ເມືອງ ສີສັດຕະນາກ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ ກໍ່ໄດ້ຜັນຂະຫຍາຍກິດຈະກຳໄປສູ່ 5 ຕົວເມືອງທີ່ຍັງເຫຼືອ. ທີມງານຂັ້ນແຂວງສະໜັບສະໜູນທີມງານຂັ້ນເມືອງ ໃນການເລີ່ມຕົ້ນຈັດຕັ້ງປະຕິບັດກິດຈະກຳ. ອີງຕາມຄຳເຫັນຂອງຂະແໜງ ການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ໃຫ້ຮູ້ວ່າ "ສຳລັບ 5 ເມືອງໃໝ່ ພະແນກສຶກສາທິການ ແລະ ກິລາແຂວງ ໄດ້ຈັດປະຊຸມຊີ້ແຈງໃຫ້ຜູ່ຮັບຜິດຊອບຂັ້ນເມືອງ ແລະ
ເຜີຍແຜ່ປະສົບການຂອງເມືອງສີສັດຕະນາກເພື່ອເປັນ ຕົວຢ່າງໃນການຈັດຕັ້ງປະຕິບັດ".

ໜ່ວຍງານສົ່ງເສີມສຸຂະພາບຂັ້ນແຂວງນຳໃຊ້ລະບົບໂຄງຮ່າງການຈັດຕັ້ງທີ່ມີຢູ່ເພື່ອເຜີຍແຜ່ ປະສົບການໃນປະຕິບັດວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ໄດ້ນຳສະເໜີແລະ ລາຍງານຄວາມຄືບໜ້າວຽກງານສຸຂະພາບດີໃນໂຮງຮຽນຢ່າງເປັນປົກກະຕິໃນກອງປະຊຸມສ່ອງແສງປະຈຳເດືອນ. ຕົວຢ່າງໃນປີທີ່

ຜ່ານມາໂຮງຮຽນ ປະຖົມສົມບູນຈອມເພັດເຊິ່ງເປັນໂຮງຮຽນຕົວແບບ ໃນເມືອງສີສັດຕະນາກຖືກເຊື້ອເຊີນໃຫ້ນຳສະເໜີປະສົບການທີ່ດີຂອງຕົນລວມມີ ວຽກງານ
ສົ່ງເສີມສຸຂະພາບໃນໂຮງຮຽນ ໃນກອງປະຊຸມ ວຽກງານສາມສ້າງຂອງຂະແໜງການສຶກສາ ເຊິ່ງມີຜູ້ບໍລິຫານການສຶກສາຂັ້ນເມືອງ ແລະ ຂັ້ນແຂວງ ທົ່ວປະເທດເຂົ້າຮ່ວມ. ນີ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນ ຂອງອຳນາດການປົກຄອງຂັ້ນທ້ອງຖິ່ນທີ່ນຳເອົາວຽກງານ
ສົ່ງເສີມສຸຂະພາບໃນໂຮງຮຽນ ເຂົ້າໃນວຽກງານສາມສ້າງເຊິ່ງມີຈຸດປະສົງເຮັດໃຫ້ລະດັບທ້ອງຖິ່ນມີຄວາມເຂັ້ມແຂງໂດຍສະເພາະແມ່ນເພື່ອ: (1) ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ; (2) ສ້າງເມືອງ ໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ (3) ສ້າງບ້ານໃຫ້ ເປັນຫົວໜ່ວຍພັດທະນາ.

ທ່ານນາງ ຄໍາຫວັນ ລາຊະຂັນຕີ ຫົວໜ້າຂະແໜງການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຮັບຮູ້ວ່າແຕ່ລະເມືອງມີເງື່ອນໄຂແຕກຕ່າງກັນ ແລະ ຍັງສັງເກດເຫັນວ່າ ໃນເມືອງດຽວກັນແຕ່ລະບ້ານກໍຍັງມີການພັດທະນາເສດຖະກິດ-ສັງຄົມ ທີ່ແຕກຕ່າງກັນ. ເພື່ອແກ້ໄຂສະພາບຄວາມແຕກຕ່າງເຫຼົ່ານີ້ທີມງານຂັ້ນແຂວງປະຕິບັດດັ່ງນີ້:
ກ). ແບ່ງປັນ ຂໍ້ມູນຂ່າວສານ/ຊີ້ແຈງ ຂ).ດໍາເນີນການຖອດຖອນ ບົດຮຽນ ຄ). ແລກປ່ຽນບົດຮຽນຈາກເມືອງສີສັດຕະນາກ ງ). ສືບຕໍ່ປຸກລະດົມຊຸກຍູ້ເມືອງ,ໂຮງຮຽນ ແລະ ຊຸມຊົນ ຈ). ສະໜັບສະໜູນ, ຊອກຫາວິທີການແກ້ໄຂຊ່ວຍເມືອງ ແລະ ໂຮງຮຽນຕາມຄວາມຈໍາເປັນໂດຍອີງໃສ່ສະພາບຕົວຈິງ.

## ຍຸດທະສາດ ວຽກງານສາມສ້າງ



### ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ

ພະແນກສຶກສາທິການ ແລະ ກິລາ ແລະ ຄະນະຊີ້ນໍາວຽກງານສົ່ງເສີມສຸຂະພາບໃນໂຮງຮຽນຂັ້ນແຂວງ ໄດ້ໃຊ້ຍຸດທະສາດທີ່ສະຫຼຽວສະຫຼາດ. ໃນເບື້ອງຕົ້ນເຂົາເຈົ້າເລືອກເອົາສອງເມືອງໃນ ເຂດໃຈກາງເມືອງ ແລະ ສອງເມືອງ ຂອງເຂດຊານເມືອງເພື່ອທົດລອງໂຄງການເຊິ່ງເປັນຕົວແທນໃຫ້ສະພາບເສດຖະກິດທີ່ແຕກຕ່າງກັນ.ໂຮງຮຽນກໍ່ສ້າງສິ່ງອໍານວຍຄວາມສະດວກມີຫຼາຍປະເພດຕ່າງກັນໂດຍອີງໃສ່ສະພາບເອື້ອອໍານວຍໃນທ້ອງຖິ່ນຂອງຕົນ. ໂດຍມີຍຸດທະສາດ ທີ່ອີງໃສ່ສະພາບການທ້ອງຖິ່ນແບບນີ້, ພະແນກສຶກສາທິການ ແລະ ກິລາ ຈຶ່ງສາມາດ ຂະຫຍາຍກິດຈະກໍາໄປສູ່ 9 ຕົວເມືອງໃນນະຄອນຫຼວງວຽງຈັນໄດ້



### ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ

ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຄະນະຊີ້ນໍາ ວຽກງານສົ່ງເສີມສຸຂະພາບໃນໂຮງຮຽນເຮັດວຽກຢ່າງຕັ້ງໜ້າເພື່ອເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ການສະໜັບສະໜູນ. ເຂົາເຈົ້າມີການປະສານງານກັບອົງການປົກຄອງທ້ອງຖິ່ນເພື່ອລະດົມທຶນຈາກ
ຊຸມຊົນເພື່ອໃຫ້ມີສ່ວນຮ່ວມ ແລະ ດໍາເນີນການຊີ້ແຈງໂຄງການໃຫ້ຜູ້ອໍານວຍການໂຮງຮຽນກ່ຽວກັບວິທີການຈັດຕັ້ງປະຕິບັດໂຄງການ.ປະສົບການເຫຼົ່ານີ້ຍັງເສີມສ້າງຄວາມເຂັ້ມແຂງທາງດ້ານຄວາມສາມາດໃນການບໍລິຫານ ແລະ ການເປັນຄູເຝິກອີກດ້ວຍ.



### ສ້າງບ້ານ ໃຫ້ເປັນຫົວໜ່ວຍພັດທະນາ

ອໍານາດການປົກຄອງບ້ານເປັນເຈົ້າການໃນການພັດທະນາບ້ານຂອງຕົນ ດ້ວຍການສຸມໃສ່ພັດທະນາວຽກງານການສຶກສາ ແລະ ສຸຂະພາບຂອງນັກຮຽນ. ຊຸມຊົນເຂົ້າຮ່ວມການວາງແຜນ ແລະ ສະໜັບສະໜູນໃນການກໍ່ສ້າງສິ່ງອໍານວຍຄວາມສະດວກໃຫ້ໂຮງຮຽນ ເຊັ່ນ ອ່າງລ້າງມື, ປັບປຸງລະບົບນໍ້າ...

# ພາລະບົດບາດຂອງໜ່ວຍງານສົ່ງເສີມສຸຂະພາບຂັ້ນແຂວງ







## ການມີສ່ວນຮ່ວມຂອງຊຸມຊົນ // ການຊີ້ໃຫ້ທຸກພາກສ່ວນເຂົ້າໃຈ

ໃນກອງປະຊຸມຊີ້ແຈງ, ທີມງານຂັ້ນແຂວງເນັ້ນໜັກເຖິງຄວາມຈຳເປັນທີ່ຕ້ອງໄດ້ລະດົມການມີສ່ວນຮ່ວມຈາກຫຼາຍພາກສ່ວນໃນໂຮງຮຽນ ແລະ ຊຸມຊົນ ເພື່ອເສີມສ້າງຄວາມເປັນເຈົ້າການ.

## ປັດໄຈສຳຄັນ: ສະຫຼຸບບົດຮຽນພື້ນຖານໂດຍຫຍໍ້

- ນຳໃຊ້ໂຄງຮ່າງການຈັດຕັ້ງທີ່ມີຢູ່ ແລະ ກອງປະຊຸມປົກກະຕິເພື່ອປຸກລະດົມໂຄສະນາ ແລະ ເຜີຍແຜ່ບົດຮຽນຈາກປະສົບການ
- ສ້າງສະພາບແວດລ້ອມ ແລະ ອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນຄວາມຮູ້ ແລະ ບົດຮຽນລະຫວ່າງເມືອງຕໍ່ເມືອງພາຍໃນແຂວງ
- ມອບໝາຍຄວາມຮັບຜິດຊອບ ໃຫ້ໜ່ວຍງານຂັ້ນເມືອງ ແລະ ຂັ້ນໂຮງຮຽນໃນການຈັດຕັ້ງປະຕິບັດກິດຈະກຳ
- ເສີມສ້າງຂີດຄວາມສາມາດໃນການຄຸ້ມຄອງບໍລິຫານຂັ້ນເມືອງ ແລະ ຂັ້ນໂຮງຮຽນ: ໜ່ວຍງານໄດ້ອຳນວຍຄວາມສະດວກໃຫ້ສະມາຊິກຂອງໂຮງຮຽນ ແລະ ຊຸມຊົນ ເປັນເຈົ້າການໃນການຈັດຕັ້ງປະຕິບັດກິດຈະກຳ

# ປະສົບການ



**ທ່ານນາງ ຄໍາຫວັນ ລາຊະຂັນຕິ //** ຫົວໜ້າຂະແໜງການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ

**ພວກເຮົາມີຄວາມໝັ້ນໃຈວ່າໂຄງການຈະມີຄວາມຍືນຍົງ, ຍ້ອນວ່າ ຊຸມຊົນມີສ່ວນຮ່ວມ.ເຂົາເຈົ້າປະກອບສ່ວນຢ່າງຫຼວງຫຼາຍໃນການກໍ່ສ້າງສິ່ງອໍານວຍຄວາມສະດວກໃນການລ້າງມື.ຊຸມຊົນຍັງຕິດຕາມການນໍາໃຊ້ສິ່ງອໍານວຍຄວາມສະດວກດັ່ງກ່າວຢ່າງເປັນລະບົບ. ຖ້າເຫັນວ່າມີອັນເປ່ເພຕ້ອງໄດ້ສ້ອມແປງ ພວກເຂົາເຈົ້າ ກໍຈະຈັດການສ້ອມແປງໂລດ. ຄູອາຈານ ແລະນັກຮຽນໃນໂຮງຮຽນກໍສາມາດຕິດຕາມກົດຈະກໍາໄດ້ເຊັ່ນກັນ. ໃນກໍລະນີມີບັນຫາທີ່ບໍ່ສາມາດແກ້ໄຂໄດ້ເຂົາເຈົ້າກໍລາຍງານໃຫ້ຂັ້ນເມືອງ ຫຼື ຂັ້ນແຂວງ ເພື່ອຊອກຫາວິທີແກ້ໄຂຊ່ວຍໃຫ້ທັນເວລາ.**

# 3. ສ້າງຄວາມຕ້ອງການເພື່ອຜັນຂະຫຍາຍ ແລະ ສະໜອງການສະໜັບສະໜູນທີ່ເໝາະສົມ



## ຜູ່ມີບົດບາດສຳຄັນ: ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຫົວໜ້າກຸ່ມໂຮງຮຽນ

ຄະນະບໍລິຫານການສຶກສາຂັ້ນເມືອງນຳໃຊ້ລະບົບກຸ່ມໂຮງຮຽນທີ່ມີຢູ່ແລ້ວເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍວຽກງານສຸຂະພາບດີໃນໂຮງຮຽນ.ໃນປີ 1994/95 ລະບົບກຸ່ມໂຮງຮຽນໄດ້ຮັບການສ້າງຕັ້ງຂຶ້ນໃນທຸກເມືອງ. ເມືອງສີສັດຕະນາກປະກອບດ້ວຍ3 ກຸ່ມໂດຍອີງໃສ່ທີ່ຕັ້ງພູມສັນຖານ ຂອງເມືອງເຊັ່ນ: ກຸ່ມເໜືອ (13ໂຮງຮຽນ),ກຸ່ມກາງ(15ໂຮງຮຽນ)ແລະ ກຸ່ມໃຕ້ (14ໂຮງຮຽນ). ການຕິດຕາມກວດກາດ້ານວິຊາການສຳລັບກຸ່ມໂຮງຮຽນກ່ຽວກັບວຽກງານວິຊາສະເພາະ, ກິດຈະກຳຂອງ ໂຮງຮຽນ, ສະພາບແວດລ້ອມການຮຽນຮູ້ ແລະ ວຽກງານສົ່ງເສີມສຸຂະພາບໃນໂຮງຮຽນແມ່ນຮັບຜິດຊອບໂດຍຄູສຶກສານິເທດ 3 ທ່ານ. ແຕ່ລະທ່ານໄດ້ຮັບການຮ່ວມມືຈາກກຸ່ມໂຮງຮຽນ. ແຕ່ລະກຸ່ມປະກອບມີຫົວໜ້າກຸ່ມ 1 ທ່ານ ແລະ ຮອງຫົວໜ້າກຸ້ມ2 ທ່ານ, ເຊິ່ງໃນນັ້ນ, ຫົວໜ້າກຸ່ມເປັນຜູ້ຮັບຜິດຊອບຊີ້ນຳລວມ, ຮອງຜູ່ທີໜຶ່ງ ຮັບຜິດຊອບດ້ານວິຊາການ ແລະ ຮອງຜູ່ທີສອງຮັບຜິດຊອບດ້ານກິດຈະກຳ, ສິລະປະ ແລະ ກິລາ, ລາຍລະອຽດຂໍໃຫ້ເບິ່ງຕາມໂຄງຮ່າງການເຮັດວຽກຂອງຂັ້ນເມືອງ ແລະ ກຸ່ມໂຮງຮຽນ ຕາມແຜນວາດຢູ່ໜ້າຖັດໄປ.

## ຍຸດທະສາດການຜັນຂະຫຍາຍກິດຈະກຳ ວິທີການນຳໃຊ້ກຸ່ມໂຮງຮຽນ

ໃນເມືອງສີສັດຕະນາກທ່ານ ອາຈານ ຄຳພິນ ໄຊຍະເພັດຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເປັນຜູ້ຊີ້ນຳໂຮງຮຽນທີ່ຢູ່ພາຍໃຕ້ລະບົບການສຶກສາສາຍສາມັນ (ເຊັ່ນ: ອະນຸບານ, ປະຖົມ ແລະ ມັດທະຍົມ). ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ໃຫ້ການສະໜັບສະໜູນ ວຽກງານສຸຂະພາບດີໃນໂຮງຮຽນຢ່າງຈິງຈັງ ແລະ ເປັນເຈົ້າການຊີ້ນຳການຜັນຂະຫຍາຍ. ທ່ານໄດ້ເຂົ້າຮ່ວມກອງປະຊຸມຊີ້ແຈ້ງ ເຊິ່ງ ຂັ້ນແຂວງໄດ້ຈັດຂຶ້ນ ແລະ ຂັ້ນເມືອງຮັບຮອງເອົາກິດຈະກຳລົງຈັດຕັ້ງປະຕິບັດໃນໂຮງຮຽນ. ຄະນະບໍລິຫານການສຶກສາຂັ້ນເມືອງຄັດເລືອກໂຮງຮຽນຢ່າງມີແຜນການລະອຽດໃນການສ້າງເປັນຕົວແບບໂດຍຄັດເລືອກເອົາໂຮງຮຽນຫົວໜ້າກຸ່ມ ເຊິ່ງເປັນອຳນວຍການໂຮງຮຽນ,ເຮັດໃຫ້ສະດວກໃນການແລກປ່ຽນບົດຮຽນ ແລະ ການລົງຢ້ຽມຢາມໂຮງຮຽນຕົວຈິງ. ທ່ານອາຈານ ຄຳພິນ ໄຊຍະເພັດ ຍັງເວົ້າອີກວ່າ: "ເມືອງຂອງພວກເຮົາຈະບໍ່ຢຸດເຊົາກິດຈະກຳຢູ່ພຽງແຕ່ໃນໂຮງຮຽນຕົວແບບເທົ່ານັ້ນ".

ການຕັດສິນໃຈຂອງຄະນະຫ້ອງການສຶກສາທິການ ແລະ ກິລາ ເມືອງໃນການເລືອກເອົາຫົວໜ້າກຸ່ມໂຮງຮຽນເປັນໂຮງຮຽນຕົວແບບໄດ້ກາຍເປັນເຄື່ອງມືໃນການຜັນຂະຫຍາຍວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ພາຍໃນກຸ່ມມີການປະຊຸມກັນຢູ່ໂຮງຮຽນຂອງຫົວໜ້າກຸ່ມເປັນປະຈຳ ແລະ ໄດ້ເຫັນກິດຈະກຳແບບກະທັດຮັດງ່າຍດາຍ ແລະ ສາມາດປະຕິບັດໄດ້, ຜູ່ອຳນວຍການໂຮງຮຽນອື່ນກໍໄດ້ຮັບການກະຕຸກຊຸກຍູ້ໃຫ້ຈັດຕັ້ງປະຕິບັດກິດຈະກຳ. ນອກຈາກນັ້ນຫົວໜ້າກຸ່ມໂຮງຮຽນຍັງໄດ້ ແບ່ງປັນບົດຮຽນ ແລະ ປະສົບການໃນການປະຕິບັດເຊັ່ນດຽວກັນ, ເຂົາເຈົ້າສາມາດໃຫ້ຄຳແນະນຳ ແລະ ແບ່ງປັນປະສົບການຂອງຕົນເອງ ກ່ຽວກັບວິທີການແກ້ໄຂບັນຫາທີ່ປະສົບໃນໂຮງຮຽນຕ່າງໆ. ເຂົາເຈົ້າເປັນຜູ່ແນະນຳ ແລະ ຖ່າຍທອດຄວາມຮູ້ຂອງຕົນໃນກອງປະຊຸມປົກກະຕິພາຍໃນກຸ່ມ ຫຼື ກອງປະຊຸມທົ່ວເມືອງ. ຫົວໜ້າກຸ່ມສາມາດເປັນຕົວແທນຂອງຂັ້ນເມືອງ ແລະ ມີພາລະບົດບາດໃນການໃຫ້ຄຳປຶກສາໂຮງຮຽນອື່ນ. ບາງຄັ້ງເຂົາເຈົ້າໄດ້ລົງໄປຢ້ຽມຢາມໂຮງຮຽນທີ່ຕ້ອງການຄຳແນະນຳ ແລະ ຊອກຫາວິທີການແກ້ໄຂຊ່ວຍເຫຼືອເພື່ອປັບປຸງໃຫ້ດີຂຶ້ນ.




ຄູສຶກສານິເທດ ແລະ ຫົວໜ້າກຸ່ມໂຮງຮຽນມີພາລະບົດບາດສຳຄັນ ໃນການຜັນຂະຫຍາຍ ວຽກງານສຸຂະພາບດີໃນໂຮງຮຽນ. ເຂົາເຈົ້າຮັບຮູ້ຜົນດີໃນການ ຈັດຕັ້ງປະຕິບັດເຊັ່ນ: ເຮັດໃຫ້ນັກຮຽນມີສຸຂະພາບແຂງແຮງ, ປູກຈິດສຳນຶກດ້ານການຮັກສາສຸຂະພາບ ແລະ ປັບປຸງການປະຕິບັດກິດຈະກຳຮັກສາອະນາໄມຂອງນັກຮຽນ. ຫົວໜ້າກຸ່ມໂຮງຮຽນຮູ້ພາລະບົດບາດຂອງຕົນໃນການຜັນຂະຫຍາຍວຽກງານສຸຂະພາບດີໃນໂຮງຮຽນ ດັ່ງນີ້: 1). ຮັບປະກັນ ການມີສ່ວນຮ່ວມຂອງຊຸມຊົນໃນການປະຕິບັດ, 2). ຜັນຂະຫຍາຍກິດຈະກຳໄປສູ່ໂຮງຮຽນອື່ນພາຍໃນກຸ່ມຂອງຕົນ, 3) ສະໜັບສະໜູນການແລກປ່ຽນບົດຮຽນກ່ຽວກັບວຽກງານສຸຂະພາບດີໃນໂຮງຮຽນ ແລະ ໃຫ້ຄຳແນະນຳໂຮງຮຽນພາຍໃນກຸ່ມ, ບາງຄັ້ງຍັງໄດ້ໃຫ້ບົດຮຽນ, ປະສົບການກັບເມືອງ ແລະ ແຂວງອື່ນ.

ເຂົາເຈົ້າໄດ້ແລກປ່ຽນປະສົບການ ແລະ ອະທິບາຍ ກ່ຽວກັບຜົນໄດ້ຮັບຂອງວຽກງານສຸຂະພາບດີໃນໂຮງຮຽນ ໃຫ້ຜູ້ອຳນວຍການໂຮງຮຽນທີ່ມີຄວາມ ສົນໃຈຢາກປະຕິບັດໂດຍເອົາຮູບພາບໃຫ້ເບິ່ງ ແລະ ພາໄປຢ້ຽມຢາມໂຮງຮຽນທີ່ໄດ້ຈັດຕັ້ງປະຕິບັດກິດຈະກຳມາແລ້ວ ເຂົາເຈົ້າແນະນຳໃຫ້ຜູ້ອຳນວຍການໂຮງຮຽນປຸກລະດົມການມີສ່ວນຮ່ວມຈາກອຳນາດການປົກຄອງທ້ອງຖິ່ນ ແລະ ພໍ່ແມ່ຜູ້ປົກຄອງ. ນອກນັ້ນຄູສຶກສານິເທດຍັງລະດົມຊຸກຍູ້ໂຮງຮຽນຕ່າງໆ ໃນເວລາລົງຕິດຕາມຊ່ວຍເຫຼືອດ້ານວິຊາການ. ແຕ່ລະຄັ້ງເຂົາເຈົ້າຍົກ ບັນຫາຂໍ້ໃດໜຶ່ງທີ່ເຫັນວ່າສຳຄັນ ແລະ ຈຳເປັນກວ່າໝູ່ມາແນະ ນຳເຖິງແມ່ນວ່າຈະພົບເຫັນຫຼາຍບັນຫາກໍຕາມ ແລະ ຄ່ອຍໆ ກະຕຸກຊຸກຍູ້ໃຫ້ໂຮງຮຽນ ປະຕິບັດໃຫ້ດີຂຶ້ນເທື່ອລະກ້າວ.

ຈາກການປະຕິບັດທີ່ກ່າວມານັ້ນສະແດງໃຫ້ເຮົາເຫັນວ່າຄູສຶກສານິເທດ ແລະ ຫົວໜ້າກຸ່ມໂຮງຮຽນເຮັດເປັນໜ່ວຍງານເພື່ອສະໜັບສະໜູນ ແລະ ຊ່ວຍເຫຼືອໂຮງຮຽນພາຍໃນກຸ່ມຂອງຕົນພ້ອມນັ້ນກໍໄດ້ກະຕຸກຊຸກຍູ້ໂຮງຮຽນ ແລະ ໃຫ້ຄວາມຮູ້ດ້ານວິຊາການທີ່ຈຳເປັນເພື່ອເຮັດໃຫ້ໂຮງຮຽນເລີ່ມຕົ້ນຈັດຕັ້ງປະຕິບັດກິດຈະກຳ, ມີການປັບປຸງໄປເທື່ອລະກ້າວ ແລະ ໃຫ້ມີຄວາມຍືນຍົງ. ດ້ວຍຄວາມພະຍາຍາມຂອງໜ່ວຍງານຂັ້ນເມືອງ ສາມາດກະຕຸກຊຸກຍູ້ໃຫ້ໂຮງຮຽນເກີດຄວາມ ສົນໃຈຢາກປະຕິບັດ ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ. ຖ້າໂຮງຮຽນໃດຍັງບໍ່ທັນມີຄວາມພ້ອມ ກໍຈະສືບຕໍ່ກະຕຸກຊຸກຍູ້ຈົນກວ່າຈະປະຕິບັດໄດ້. ຜົນສຳເລັດຂອງໂຮງຮຽນຕົວແບບແລະ ຈຳນວນໂຮງຮຽນທີ່ຈັດຕັ້ງປະຕິບັດໂຄງການເພີ່ມຂຶ້ນຍິ່ງເຮັດໃຫ້ ໂຮງຮຽນອື່ນໆ ຢາກເລີ່ມຕົ້ນປະຕິບັດກິດຈະກຳ ຍ້ອນວ່າພວກເຂົາເຈົ້າ

ຢາກພັດທະນາໂຮງຮຽນຕົນຄືກັບໂຮງຮຽນອື່ນ. ອັນນີ້ໄດ້ສະທ້ອນຢູ່ໃນຄໍາເຫັນຂອງໜ່ວຍງານຂັ້ນແຂວງວ່າ ພໍແຕ່ສາມາດເລີ່ມຕົ້ນປະຕິບັດກິດຈະກໍາຢູ່ໃນ ໂຮງຮຽນໃດໜຶ່ງໂຮງຮຽນອື່ນໆກໍຈະປະຕິບັດຕາມ.

## ພາລະບົດບາດ ຂອງຄູສຶກສານິເທດ ແລະ ຫົວໜ້າກຸ່ມໂຮງຮຽນ




### ປັດໄຈສໍາຄັນ: ສະຫຼຸບບົດຮຽນພື້ນຖານໂດຍຫຍໍ້

- ນໍາໃຊ້ລະບົບການຈັດຕັ້ງທີ່ມີຢູ່ແລ້ວຂອງຂັ້ນເມືອງຢ່າງມີປະສິດທິຜົນເຊັ່ນ: ລະບົບກຸ່ມໂຮງຮຽນ, ລະບົບການຕິດຕາມ ແລະ ກອງປະຊຸມປົກກະຕິ
- ທີມງານບໍລິຫານຂັ້ນເມືອງມີຄວາມຫ້າວຫັນເປັນເຈົ້າການ ແລະ ໃຫ້ສະໜັບສະໜູນໂຮງຮຽນ
- ຄູສຶກສານິເທດ ແລະຫົວໜ້າກຸ່ມໂຮງຮຽນມີຄວາມຮູ້ດ້ານ ວິຊາການ, ການສື່ສານ ແລະ ທັກສະການໃຫ້ຄໍາປຶກສາເປັນຢ່າງດີ
- ກຸ່ມໂຮງຮຽນກາຍເປັນບ່ອນແລກປ່ຽນປະສົບການໃນການຈັດຕັ້ງປະຕິບັດໂຄງການ ແລະ ລະດົມຊຸກຍູ້ໃຫ້ມີການພັດທະນາທຸກໂຮງຮຽນໃນກຸ່ມ
- ເອື້ອອໍານວຍໃຫ້ມີການຮຽນຮູ້ລະຫ່ວາງໂຮງຮຽນກັບໂຮງຮຽນພາຍໃນກຸ່ມ
- ສ້າງເງື່ອນໄຂ ແລະ ບັນຍາກາດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ປະກອບສ່ວນສະໜັບສະໜູນ
- ກະຕຸ້ນໃຫ້ເກີດມີຄວາມສົນໃຈດ້ວຍການສ້າງໂຮງຮຽນຕົວແບບທີ່ດີ ແລະ ໃຫ້ໂຮງຮຽນອື່ນນໍາໄປພິຈາລະນາ
- ເງື່ອນໄຂດ້ານເສດຖະກິດ-ສັງຄົມ ແລະ ທີ່ຕັ້ງພູມສັນຖານສະດວກກໍເປັນການເອື້ອອໍານວຍແກ່ການຜັນຂະຫຍາຍໂຄງການ
- ຊຸມຊົນ ແລະ ໂຮງຮຽນສາມາດລະດົມທຶນໄດ້

# ປະສົບການ



ທ່ານ ຄຳພິນ ໄຊຍະເພັດ // ຮອງຫົວໜ້າສຶກສາທິການ ແລະ ກິລາເມືອງສີສັດຕະນາກ

**"ພວກເຮົາມີແນວຄິດກ່ຽວກັບການຜັນຂະຫຍາຍກິດຈະກຳເລີ່ມແຕ່ເວລາທີ່ພວກເຮົາຄັດເລືອກ ແລະ ສ້າງຕັ້ງໂຮງຮຽນຕົວແບບ. ສະນັ້ນ, ພວກເຮົາຈິ່ງໄດ້ເລືອກເອົາໂຮງຮຽນຫົວໜ້າກຸ່ມເພື່ອສ້າງເປັນໂຮງຮຽນຕົວແບບ "**

**ຄວາມຈິງ**

## ກະຕຸ້ນໃຫ້ເກີດມີຄວາມສົນໃຈ ແລະ ໃຫ້ການສະໜັບສະໜູນ!

**ການສ້າງໂຮງຮຽນຕົວແບບທີ່ດີ ແລະ ການສ້າງເງື່ອນໄຂໃຫ້ໂຮງຮຽນອື່ນເຂົ້າຫາໂຮງຮຽນຕົວແບບເຫຼົ່ານັ້ນຈະຊ່ວຍໃຫ້ເກີດມີຄວາມສົນໃຈ ແລະ ລິເລີ່ມປະຕິບັດຕາມ. ເມື່ອໂຮງຮຽນໃດມີຄວາມສົນໃຈກໍ່ຈະມີການເຜີຍແຜ່ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ຂອງພວກເຂົາເຈົ້າ, ໜ່ວຍງານຂັ້ນເມືອງຊ່ວຍເຫຼືອ ດ້ານວິຊາການ, ໃຫ້ຄຳແນະນຳ, ໃຫ້ກຳລັງໃຈ ແລະ ລະດົມຊຸກຍູ້.**

# 4. ຕົວແບບການປະຕິບັດວຽກງານສົ່ງເສີມສຸຂະພາບດີ



## ຜູ່ມີບົດບາດສຳຄັນ: ຜູ່ອຳນວຍການໂຮງຮຽນ

ຜູ່ອຳນວຍການໂຮງຮຽນມີບົດບາດສຳຄັນໃນການຮັບປະກັນການຈັດຕັ້ງປະຕິບັດວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນໃຫ້ໄດ້. ການເຮັດໃຫ້ວຽກດັ່ງກ່າວດຳເນີນໄປໄດ້ດີນັ້ນ ຜູ່ອຳນວຍການໂຮງຮຽນຈຳເປັນຕ້ອງນຳໃຊ້ຄວາມຮູ້ຄວາມສາມາດໃນການບໍລິຫານໂຮງຮຽນ ແລະ ປຸກລະດົມໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງມີສ່ວນຮ່ວມໃນການວາງແຜນ, ການລະດົມທຶນຮອນ ແລະ ການຕິດຕາມກວດກາ.

## ຍຸດທະສາດການຜັນຂະຫຍາຍ: ນຳໃຊ້ການບໍລິຫານໂດຍໂຮງຮຽນເປັນຫຼັກ

ການມີໂຮງຮຽນຕົວແບບທີ່ປະຕິບັດໄດ້ດີ ມີປະໂຫຍດຢ່າງຫຼວງຫຼາຍຕໍ່ການຜັນຂະຫຍາຍວຽກງານສົ່ງເສີມສຸຂະພາບດີຢູ່ເມືອງສີສັດຕະນາກ. ອຳນວຍການ, ຄູສອນ ແລະ ຫົວໜ້າຫ້ອງໃນໂຮງຮຽນຕົວແບບກາຍເປັນທີ່ປຶກສາໃຫ້ກັບໂຮງຮຽນອື່ນ. ບັນດາອຳນວຍການໂຮງຮຽນອື່ນໆ ຜູ່ທີ່ໄດ້ປະຕິບັດກິດຈະກຳຕາມຫຼັງໄດ້ບອກໃຫ້ຮູ້ວ່າ: ທຳອິດເຂົາເຈົ້າໄດ້ ຮັບຮູ້ເລື່ອງນີ້ຈາກໜ່ວຍງານຂັ້ນເມືອງພ້ອມທັງໄດ້ເຫັນສິ່ງອຳນວຍຄວາມສະດວກ ແລະ ກິດຈະກຳສຸຂະອະນາໄມປະຈຳວັນຢູ່ໃນໂຮງຮຽນຫົວໜ້າກຸ່ມເວລາມາປະຊຸມ ສິ່ງເຫຼົ່ານັ້ນໄດ້ເຮັດໃຫ້ເຂົາເຈົ້າມີຄວາມໝັ້ນໃຈໃນການນຳເອົາກິດຈະກຳໄປປະຕິບັດໃນໂຮງຮຽນຂອງຕົນ. ນອກຈາກນັ້ນເຂົາເຈົ້າຍັງບອກວ່າ ມັກ ແລະ ຢາກປະຕິບັດກິດຈະກຳແບບນີ້ໃນໂຮງຮຽນຂອງຕົນ ພ້ອມທັງປັບປຸງເງື່ອນໄຂສິ່ງອຳນວຍຄວາມສະດວກຕ່າງໆ ທີ່ມີຢູ່ແລ້ວໃຫ້ດີຂຶ້ນ.

ເມື່ອຂໍ້ມູນຂ່າວສານກິດຈະກຳສົ່ງເສີມສຸຂະພາບດີໃນໂຮງຮຽນ ໄດ້ຖືກເຜີຍແຜ່ໄປພາຍໃນກຸ່ມ ມີບາງຄົນກໍຢາກໄປເຫັນດ້ວຍຕົນເອງ. ໃນນັ້ນມີໂຮງຮຽນໜຶ່ງ ຜູ່ຮັບຜິດຊອບວຽກງານສົ່ງເສີມສຸຂະພາບ ໄດ້ໄປເບິ່ງວິທີຈັດຕັ້ງປະຕິບັດກິດຈະກຳຢູ່ໂຮງຮຽນຕົວແບບ ແລະ ໄດ້ນຳມາແລກປ່ຽນພ້ອມທັງຜັນຂະຫຍາຍ ໃຫ້ຄົນອື່ນໆຮູ້ນຳ.

ຜູ່ອຳນວຍການໂຮງຮຽນສາມາດລິເລີ່ມ ແລະ ສ້າງການຮ່ວມມືທີ່ດີກັບຊຸມຊົນ, ເຊິ່ງເປັນສິ່ງສຳຄັນອັນໜຶ່ງໃນການບໍລິຫານ-ຄຸ້ມຄອງໂຮງຮຽນ. ຜູ່ອຳນວຍການໂຮງຮຽນ , ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ພໍ່ແມ່ຜູ່ປົກຄອງໄດ້ເຂົ້າຮ່ວມວາງແຜນໃນເບື້ອງຕົ້ນ. ຂັ້ນຕອນທຳອິດແມ່ນການເລືອກແບບຂອງສິ່ງອຳນວຍ ຄວາມສະດວກ (ອ່າງລ້າງມື) ໃນການປະຕິບັດກິດຈະກຳກຸ່ມ,ເຊິ່ງມີ 3 ແບບໃຫ້ເລືອກ ເຊັ່ນ: ກ). ແບບມູນຄ່າບໍ່ແພງ( ໃຊ້ວັດສະດຸທີ່ມີໃນທ້ອງຖິ່ນ), ຂ). ແບບໃຊ້ທໍ່ນ້ຳ PVC ແລະ ຄ). ແບບເຮັດດ້ວຍຊີມັງ. ຫຼັງຈາກນັ້ນ ໄດ້ປຶກສາຫາລື ກ່ຽວກັບມູນຄ່າ ແລະ ປະໂຫຍດຂອງສິ່ງອຳນວຍຄວາມ ສະດວກແຕ່ລະແບບ ພ້ອມທັງວາງແຜນໃນການລະດົມທຶນ ອາດຈະເປັນວັດຖຸ ຫຼື ເປັນເງິນໃນຊຸມຊົນຂອງຕົນ. ນີ້ເປັນພຽງຜົນສຳເລັດເບື້ອງຕົ້ນຂອງການຮ່ວມມືລະຫວ່າງໂຮງຮຽນ ແລະ ຊຸມຊົນ. ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ພໍ່ແມ່ຜູ້ປົກຄອງມີສ່ວນຮ່ວມໃນການກໍ່ສ້າງສິ່ງອຳນວຍຄວາມສະດວກ (ອ່າງລ້າງມື), ຕິດຕາມກວດກາ ແລະ ໃຫ້ຄວາມຄິດເຫັນໃນການປັບປຸງ. ຍ້ອນວ່າ ຊຸມຊົນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດທຸກຂັ້ນຕອນ ຈິ່ງເຮັດໃຫ້ມີຄວາມເປັນເຈົ້າການເພື່ອຮັບປະກັນຄວາມຍືນຍົງ. ນອກຈາກນັ້ນ, ຍັງມີກົນໄກການບໍລິຫານ-ຄຸ້ມຄອງດ້ານການເງິນ ແລະ ມີຄວາ

ມຮັບຜິດຊອບຕໍ່ການນຳໃຊ້ທຶນຮອນ. ການນຳໃຊ້ທຶນຮອນທີ່ມີຄວາມໂປ່ງໃສເປັນປັດໃຈໜຶ່ງທີ່ສຳຄັນ ແລະ ເປັນຕົວຊີ້ວັດການບໍລິຫານ-ຄຸ້ມຄອງ ໂຮງຮຽນທີ່ເຂັ້ມແຂງ. ບັນດາກິດຈະກຳເຫຼົ່ານີ້ໄດ້ເຊື່ອມສານເຂົ້າໃນແຜນພັດທະນາໂຮງຮຽນພາຍໃຕ້ອົງປະກອບດ້ານສະພາບແວດລ້ອມທີ່ຖືກສຸຂະອະນາໄມ ແລະ ມີຄວາມປອດໄພ. ອຳນວຍການໂຮງຮຽນມີບົດບາດໃນການຊີ້ນຳ ແລະ ສືບຕໍ່ນຳພາຈັດຕັ້ງປະຕິບັດຢູ່ໃນໂຮງຮຽນໃຫ້ມີຄວາມຍືນຍົງ.

ອີກປະການໜຶ່ງທີ່ພົ້ນເດັ່ນແມ່ນບັນດາໂຮງຮຽນມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແບ່ງປັນປະສົບການໃນການຈັດຕັ້ງປະຕິບັດກັບໂຮງຮຽນທີ່ມີຄວາມສົນໃຈ ເຊັ່ນ: ວິທີການລະດົມທຶນ, ດ້ານວິຊາການ ແລະ ອື່ນໆ.

ຜູ່ຖືກສຳພາດສ່ວນຫຼາຍຍັງບອກໃຫ້ຮູ້ວ່າການຜັນຂະຫຍາຍກິດຈະກຳອາດຈະພົບບັນຫາທີ່ເປັນອຸປະສັກ ເຊັ່ນ: ຖ້າຊຸມຊົນບໍ່ໃຫ້ການສະໜັບສະໜູນ, ຄວາມສາມາດໃນການບໍລິຫານ-ຄຸ້ມຄອງໂຮງຮຽນຂອງອຳນວຍການຍັງບໍ່ເຂັ້ມແຂງ ແລະ ມີຄວາມຫຍຸ້ງຍາກໃນການຈັດຫານ້ຳ. ນອກນັ້ນການລະດົມທຶນໃນໂຮງຮຽນຂະໜາດນ້ອຍກໍ່ສາມາດເປັນສິ່ງທ້າທາຍອີກດ້ວຍ.

## 3 ແບບຂອງສິ່ງອຳນວຍຄວາມສະດວກ



ແບບມູນຄ່າບໍ່ແພງ ຫຼື ໃຊ້ ກອັກ ກະຕຸກນ້ຳ



ໃຊ້ທໍ່ PVC



ປະເພດກໍ່ດ້ວຍສີມັງ




## ການມີສ່ວນຮ່ວມຂອງຊຸມຊົນ // ການເລືອກແບບສິ່ງອຳນວຍຄວາມສະດວກ

ອຳນວຍການໂຮງຮຽນຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ (ເຊັ່ນ: ການເລືອກແບບສິ່ງອຳນວຍຄວາມສະດວກ, ການລະດົມທຶນ, ການກໍ່ສ້າງ ແລະ ການບົວລະບັດຮັກສາ).

### ປັດໃຈສຳຄັນ: ສະຫຼູບບົດຮຽນພື້ນຖານໂດຍຫຍໍ້

- ທຸກພາກສ່ວນທີ່ກ່ຽວຂ້ອງຂອງໂຮງຮຽນຕົວແບບ ໄດ້ເປັນແບບຢ່າງໃຫ້ໂຮງຮຽນອື່ນໆ ໃນກຸ່ມໂຮງຮຽນ.
- ຄວາມສາມາດດ້ານການບໍລິຫານ-ຄຸ້ມຄອງຂອງອຳນວຍການ ມີດັ່ງນີ້:
  - ຄວາມສາມາດໃນການລະດົມການມີສ່ວນຮ່ວມ ແລະ ການສ້າງຄວາມເປັນເຈົ້າການຈາກຊຸມຊົນ (ຕັ້ງແຕ່ເລີ່ມຕົ້ນຈົນຕະຫຼອດຂະບວນການ)
  - ຄວາມເປັນຜູ້ນຳ: ມີຄວາມມຸ່ງໝັ້ນ ແລະ ສາມາດນຳພາພາກສ່ວນກ່ຽວຂ້ອງເຊັ່ນ: ຄະນະພັດທະນາ ການສຶກສາຂັ້ນບ້ານ, ພໍ່ແມ່ຜູ້ປົກຄອງ, ຄູອາຈານ, ຫົວໜ້ານັກຮຽນ ຫຼື ຫົວໜ້າຫ້ອງຮຽນ ເພື່ອໃຫ້ມີຄວາມເປັນເຈົ້າການ
  - ການຄຸ້ມຄອງດ້ານການເງິນທີ່ມີຄວາມໂປ່ງໃສ
  - ການເຊື່ອມໂຍງວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ເຂົ້າໃນແຜນພັດທະນາໂຮງຮຽນ ເຊິ່ງຢູ່ພາຍໃຕ້ຫົວຂໍ້ວຽກງານສະພາບແວດລ້ອມທີ່ດີຕໍ່ສຸຂະພາບ ແລະ ຄວາມປອດໄພ.
  - ມີການແລກປ່ຽນຄວາມຮູ້ຢ່າງຫ້າວຫັນ ເຊັ່ນ: ການລະດົມທຶນ ແລະ ດ້ານວິຊາການກັບໂຮງຮຽນ ອື່ນເປັນປະຈຳ
- ມີຄວາມຫ້າວຫັນຢ່າງຕັ້ງຫນ້າ, ມີຄວາມເຕັມໃຈ ແລະ ຄວາມກະຕືລືລົ້ນ ເພື່ອປັບປຸງກິດຈະກຳ.
- ຄວາມກະຕືລືລົ້ນຂອງພໍ່ແມ່ຜູ້ປົກຄອງມີສູງເທົ່າໃດຍິ່ງເຮັດໃຫ້ຜູ້ອຳນວຍການໂຮງຮຽນມີຄວາມຮັບຜິດຊອບ ແລະ ຄວາມມຸ່ງໝັ້ນເພື່ອຮັກສາກິດຈະກຳໃຫ້ຍືນຍົງ.
- ຊຸມຊົນ ແລະ ພາກສ່ວນຕ່າງໆ ມີສ່ວນຮ່ວມໃນການຕິດຕາມກວດກາກິດຈະກຳຢ່າງເປັນປົກກະຕິ ເຮັດໃຫ້ໂຮງຮຽນ ແລະ ຊຸມຊົນສາມາດເຫັນໄດ້ຄວາມຈຳເປັນ ເຊັ່ນ: ການສ້ອມແປງ ຫຼື ການປັບປຸງສິ່ງອຳ ນວຍຄວາມສະດວກ (ອ່າງລ້າງມື) ແລະ ສົ່ງເສີມ ການປະຕິບັດກິດຈະກຳອະນາໄມໃຫ້ເປັນປົກກະຕິທຸກມື້.

## ປະສົບການ



**ທ່ານນາງ ເລື່ອນທອງ ໄຊຍະວົງ //** ອຳນວຍການໂຮງຮຽນປະຖົມ ດົງສະຫວາດ
**" ໃນຖານະເປັນອຳນວຍການໂຮງຮຽນ ຂ້າພະເຈົ້າມີຄວາມມຸ່ງໝັ້ນວ່າຈະບໍ່ຢຸດຕິ ກິດຈະກຳ. ພໍ່ແມ່ຜູ້ປົກຄອງມີຄວາມພາກພູມໃຈຕໍ່ກິດຈະກຳນີ້ຫຼາຍຖ້າພວກເຮົາຢຸດຕິພໍ່ແມ່ຜູ້ປົກຄອງກໍຈະເສຍໃຈ."**

# 5. ການປຸກລະດົມສ່ວນຮ່ວມຈາກຊຸມຊົນ



## ຜູ້ມີບົດບາດສໍາຄັນ: ຄະນະພັດທະນາການສຶກສາຂັ້ນບ້ານ

ຄະນະພັດທະນາການສຶກສາຂັ້ນບ້ານເປັນຜູ້ມີສ່ວນຮ່ວມທີ່ສໍາຄັນໃນໂຮງຮຽນ. ຄະນະດັ່ງກ່າວ ປະກອບດ້ວຍນາຍບ້ານ, ສະຫະພັນແມ່ຍິງ, ຊາວໜຸ່ມ, ສະມາຄົມພໍ່ແມ່ນັກຮຽນ, ແນວໂຮມ, ອໍານວຍການໂຮງຮຽນ ແລະ ຄູ. ຄະນະພັດທະນາການສຶກສາຂັ້ນບ້ານໄດ້ຮັບການເລືອກຕັ້ງທຸກໆສາມປີ. ໂດຍປົກກະຕິແລ້ວນາຍບ້ານເປັນປະທານ ສ່ວນອໍານວຍການໂຮງຮຽນເປັນຮອງປະທານ.

## ຍຸດທະສາດການຜັນຂະຫຍາຍກິດຈະກໍາ: ການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການຂອງຊຸມຊົນ

ການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການຂອງຊຸມຊົນເປັນສິ່ງສໍາຄັນໃນການຜັນຂະຫຍາຍກິດຈະກໍາ. ບັນດາໂຮງຮຽນໃນເມືອງສີສັດຕະນາກສາມາດລະດົມຊຸມຊົນຂອງຕົນໃຫ້ສະໜັບສະໜູນກິດຈະກໍາ. ຊຸມຊົນໄດ້ມີສ່ວນຮ່ວມແຕ່ເລີ່ມຕົ້ນໂດຍສະເພາະແມ່ນໃນການວາງແຜນ ແລະ ການຕັດສິນໃຈເລືອກຮູບແບບສິ່ງອໍານວຍຄວາມສະດວກໃນການລ້າງມື. ຫຼັງຈາກນັ້ນຊຸມຊົນໄດ້ລະດົມທຶນເພື່ອສ້າງສິ່ງອໍານວຍຄວາມສະດວກໃນການລ້າງມືເປັນກຸ່ມຕາມທີ່ໄດ້ເລືອກໄວ້. ເຂົາເຈົ້າໃຊ້ຫຼາຍວິທີເຊັ່ນ: ເຂົ້າຫາບໍລິສັດ, ຫ້າງຮ້ານ ແລະ ບຸກຄົນທີ່ມີຈິດໃຈຢາກຊ່ວຍເຫຼືອສັງຄົມ. ຄະນະພັດທະນາການສຶກສາຂັ້ນບ້ານມີຄວາມຮັບຜິດຊອບສູງໃນການນໍາໃຊ້ທຶນຮອນທີ່ໄດ້ມາ. ມີການສະຫຼຸບລາຍງານລາຍຮັບ-ລາຍຈ່າຍທັງໝົດ (ທັງເງິນ ແລະ ເປັນວັດຖຸ)ຢ່າງໂປ່ງໃສ.

ໃນເມື່ອໂຮງຮຽນສໍາເລັດການກໍ່ສ້າງສິ່ງອໍານວຍຄວາມສະດວກໃນການລ້າງມືເປັນກຸ່ມ ແລະ ໄດ້ເລີ່ມຕົ້ນດໍາເນີນກິດຈະກໍາແລ້ວ, ພໍ່ແມ່ຜູ້ປົກຄອງ ແລະ ຄະນະພັດທະນາການສຶກສາຂັ້ນບ້ານຍັງມີສ່ວນຮ່ວມໃນການຕິດຕາມກວດກາ. ນອກຈາກນັ້ນຍັງໄດ້ຊອກຫາວິທີການປັບປຸງການປະຕິບັດກິດຈະກໍາໃຫ້ດີຂຶ້ນເທື່ອກ້າວ. ພ້ອມທັງຕິດຕາມຄວາມຈໍາເປັນໃນການສ້ອມແປງສິ່ງອໍານວຍຄວາມສະດວກເຫຼົ່ານັ້ນ ແລະ ຊ່ວຍສ້ອມແປງ ຫຼື ສະໜັບສະໜູນທຶນເພື່ອສ້ອມແປງ. ອີກດ້ານໜຶ່ງການຂາດແຄນທຶນຮອນກໍສາມາດເປັນອຸປະສັກກີດຂວາງຕໍ່ການຜັນຂະຫຍາຍ ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນໄດ້. ບາງໂຮງຮຽນອາດບໍ່ສາມາດໄດ້ຮັບການປະກອບສ່ວນຈາກຊຸມຊົນຕາມຄວາມຕ້ອງການ ແລະ ຕ້ອງໄດ້ຊອກຫາການສະໜັບສະໜູນເພີ່ມເຕີມ. ການລະດົມທຶນຍັງມີຂໍ້ຫຍຸ້ງຍາກສໍາລັບໂຮງຮຽນຂະໜາດນ້ອຍທີ່ມີນັກຮຽນຈໍານວນໜ້ອຍ. ໃນກໍລະນີນີ້ວິທີແກ້ໄຂອາດຈະເລືອກເອົາ ສິ່ງອໍານວຍຄວາມສະດວກໃນການລ້າງມືເປັນກຸ່ມແບບທີ່ມີມູນຄ່າບໍ່ແພງ ຫລື ລະດົມທຶນໃນຊຸມຊົນອື່ນ ແລະ ພາກສ່ວນເອກະຊົນໃນທ້ອງຖິ່ນຕື່ມອີກ.

## ປະສົບການ



**ທ່ານນາງແສງເດືອນ ບຸດສະດີ //** ຜູ້ປົກຄອງນັກຮຽນຈາກໂຮງຮຽນປະຖົມສົມບູນ ຈອມເພັດ

**"ຂ້າພະເຈົ້າພູມໃຈຫຼາຍທີ່ໄດ້ປະກອບສ່ວນ. ກິດຈະກຳນີ້ຊ່ວຍໃຫ້ເດັກນ້ອຍໄດ້ປະຕິບັດກິດຈະກຳອະນາໄມ**

**ປະຈຳວັນ ເຊັ່ນ: ການລ້າງມືກ່ອນກິນອາຫານ ແລະ ການຖູແຂ້ວ. ດຽວນີ້ລູກຂອງຂ້າພະເຈົ້າສະອາດກວ່າແຕ່ກ່ອນ ແລະ ລາວຍັງໄດ້ຊຸກຊວນອ້າຍເອື້ອຍນ້ອງຂອງຕົນປະຕິບັດເປັນກິດຈະກຳຢູ່ເຮືອນ. ພວກເຮົາສະໜັບສະໜູນໂຮງຮຽນເປັນວັດຖຸ ແລະ ເປັນແຮງງານໃນການກໍ່ສ້າງສິ່ງອຳນວຍຄວາມສະດວກໃນການລ້າງມື. ຂ້າພະເຈົ້າສະໜັບສະໜູນໂຮງຮຽນເພາະວ່າສິ່ງທີ່ປະຕິບັດລ້ວນແຕ່ມີຜົນປະໂຫຍດໃຫ້ລູກຫຼານຂອງພວກເຮົາ ແລະ ຂ້າພະເຈົ້າເຫັນວ່າຢູ່ໂຮງຮຽນມີຫຼາຍສິ່ງຫຼາຍຢ່າງໄດ້ຮັບການປັບປຸງ**




### ການມີສ່ວນຮ່ວມຂອງຊຸມຊົນ // ການນຳໃຊ້ທຶນຮອນຢ່າງໂປ່ງໃສ

ໂຮງຮຽນ ແລະ ຊຸມຊົນມີຄວາມຮັບຜິດຊອບສູງຕໍ່ທຶນຮອນທີ່ໄດ້ມາດ້ວຍການລາຍງານໃຫ້ພໍ່ແມ່ຜູ້ປົກຄອງ ແລະ ຜູ້ປະກອບສ່ວນ ຮັບຊາບກ່ຽວກັບທຶນທີ່ໄດ້ຮັບຈາກການປຸກລະດົມ ແລະ ລາຍລະອຽດໃນການໃຊ້ຈ່າຍ.

### ປັດໄຈສຳຄັນ: ສະຫຼຸບບົດຮຽນພື້ນຖານໂດຍຫຍໍ້

- ຄວາມເປັນເຈົ້າການຂອງຊຸມຊົນແມ່ນໝາກຫົວໃຈສຳຄັນຂອງຜົນສຳເລັດໃນການຈັດຕັ້ງປະຕິບັດ ແລະ ການຜັນຂະຫຍາຍກິດຈະກຳ
- ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ພໍ່ແມ່ຜູ້ປົກຄອງ ມີສ່ວນຮ່ວມແຕ່ເບື້ອງຕົ້ນ
- ຄວາມສາມາດ ຂອງອຳນວຍການໂຮງຮຽນ ແລະ ຊຸມຊົນໃນການລະດົມທຶນ ເປັນສິ່ງສຳຄັນ ຕໍ່ຜົນສຳເລັດໃນການປະຕິບັດ ກິດຈະກຳ

# ແຮງກະຕຸ້ນ ພາໃຫ້ເກີດມີຜົນສໍາເລັດ ໃນການຜັນຂະຫຍາຍກິດຈະກໍາ

ປະສົບການຂອງເມືອງສີສັດຕະນາກສະແດງໃຫ້ເຫັນວ່າມີຫຼາຍດ້ານທີ່ປະກອບສ່ວນເຂົ້າໃນການຜັນຂະຫຍາຍວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ ຢ່າງມີຜົນສໍາເລັດ. ໂດຍສະເພາະຂະແໜງການສຶກສາ, ຂະແໜງສາທາລະນະສຸກ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ປະກອບສ່ວນເຂົ້າໃນຜົນສໍາເລັດນີ້. ເຖິງຢ່າງໃດກໍຕາມປັດໄຈສໍາຄັນສະເພາະທີ່ຖືກຄົ້ນພົບເປັນແຮງກະຕຸ້ນ ໃນການຜັນຂະຫຍາຍກິດຈະກໍາໃຫ້ມີຜົນສໍາເລັດ ມີດັ່ງຕໍ່ໄປນີ້:

1

ມີສະພາບແວດລ້ອມດ້ານນະໂຍບາຍທີ່ສະໜັບສະໜູນ

2

ຜູ້ຊີ້ນໍາຂັ້ນເມືອງມີຄວາມເປັນຜູ້ນໍາທີ່ເຂັ້ມແຂງ ມີຄວາມເຫັນພ້ອມກັບຂະບວນການຂອງກິດຈະກໍາ, ມີແນວຄິດ ແລະ ວິໄສທັດຢາກຜັນຂະຫຍາຍ ແຕ່ເບື້ອງຕົ້ນ

3

ການນໍາໃຊ້ລະບົບການຈັດຕັ້ງທີ່ມີຢູ່ແລ້ວ (ເຊັ່ນ: ລະບົບກຸ່ມໂຮງຮຽນ, ກອງປະຊຸມປົກກະຕິ) ໃນການປະຕິບັດກິດຈະກໍາ ແລະ ແລກປ່ຽນຂໍ້ມູນຂ່າວສານ.



ສິ່ງທີ່ກ່າວມາຂ້າງເທິງເປັນປັດໃຈທີ່ສາມາດຄວບຄຸມການສືບຕໍ່ຜັນຂະຫຍາຍກິດຈະກໍາ ໃນ ສປປ ລາວ. ນອກຈາກການວິໄຈຄົ້ນຄວ້ານີ້ແລ້ວ, ບົດຮຽນຈາກກໍລະນີການສຶກສາຂອງເມືອງສີສັດຕະນາກຍັງໄດ້ຮັບການລວມລວມເປັນວີດີໂອ ເພື່ອເປັນທິດທາງໃຫ້ແກ່ໜ່ວຍງານສົ່ງເສີມສຸຂະພາບຂັ້ນເມືອງໃນການດໍາເນີນການເຜີຍແຜ່ ແລະ ການຜັນຂະຫຍາຍກິດຈະກໍາໃນເມືອງຂອງຕົນ. ມັນສະໜັບສະໜູນ ແລະ
ເສີມສ້າງຂີດຄວາມສາມາດການຄຸ້ມຄອງບໍລິຫານຂັ້ນເມືອງ ແລະ ຂັ້ນໂຮງຮຽນ ໃນການປະຕິບັດກິດຈະກໍາແບບຍືນຍົງ ເຊິ່ງເປັນສ່ວນໜຶ່ງຂອງຂະບວນການຜັນຂະຫຍາຍຂອງກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ.



7

ມີຄວາມເປັນເຈົ້າການ ແລະ ການສະໜັບສະໜູນຂອງຊຸມຊົນ

6

ມີວິທີການແລກປ່ຽນຄວາມຮູ້ທີ່ມີປະສິດທິພາບໂດຍສະເ
ພາະແມ່ນການໄປຢ້ຽມຢາມໂຮງຮຽນ,ການແລກ
ປ່ຽນບົດຮຽນໃນກອງປະຊຸມທີ່ຈັດຂຶ້ນຕາມປົກກະຕິ
ຫຼື ການສາຍວິດີໂອ.

5

ການຕັດສິນໃຈໃຫ້ໂຮງຮຽນຫົວໜ້າກຸ່ມເປັນຕົວແບບເພື່ອໃຫ້ໂຮ
ງຮຽນອື່ນພາຍໃນກຸ່ມສາມາດໄປຢ້ຽມຢາມ ແລະ ຮຽນຮູ້ກ່ຽວກັບ
ວຽກງານສົ່ງເສີມສຸຂະພາບດີໃນໂຮງຮຽນ

4

ໜ່ວຍງານວິຊາການຂັ້ນເມືອງ (ຄູນິເທດ ແລະ ຫົວຫນ້າກຸ່ມໂຮງຮຽນ) ມີ
ຄວາມສາມາດໃນການໃຫ້ຄຳປຶກສາແນະນຳ ແລະ ລະດົມຊຸກຍູ້ອຳນວຍກ
ານໂຮງຮຽນໃນການສືບຕໍ່ປັບປຸງການປະຕິບັດກິດຈະກຳ

# 6. ເອກະສານ ອ້າງອີງ




1. Bundy, D. (2011). *Rethinking school health: A key component of education for all.* Washington DC: The International Bank for Reconstruction and Development/ The World Bank.

2. GIZ Regional Fit for School Program (2015). Fit for School: Situation Analysis and Capacity Assessment Lao PDR.

3. Vientiane  Capital Department of Education and Sport (2015). Schools, teachers and classrooms data of primary schools in 9 district of VTE capital for 2014-2015 school year.

4. Vientiane Capital Department of Education and Sport (2002). Provincial education structure guide October 2002.

5. World Bank (2009). School-based management in Lao PDR: Current conditions and recommendations for the future. Retrieved from http://www-wds.worldbank.org/external/default/WDSContentServer/WDSP/IB/2014/01/03/000461832_201 40103171322/Rendered/PDF/837640WP00P1310Box0382112B00PUBLIC0.pdf


Global Hand Washing

# ບັນທຶກ

# ບັນທຶກ

# ການຈັດພິມ

© 2016 GIZ Fit for School
Deutsche Gesellschaft f r
Internationale Zusammenarbeit (GIZ) GmbH
Fit for School
11/F PDCP Bank Centre
cor. V.A. Rufino and L.P. Leviste Streets
Salcedo Village, Makati City 1227
Philippines
www.giz.de

© 2016 1st edition: Verlagshaus Monsenstein und Vannerdat OHG, M nster, Germany
www.mv-verlag.de
Design: Malzwei, Berlin, Germany and Dang Sering, Manila, Philippines

ອົງການ GIZ ຈັດຕັ້ງປະຕິບັດໂຄງການ ແລະ ແຜນງານເພື່ອ ການພັດທະນາແບບຍືນຍົງ ໂດຍເປັນຕົວແທນໃຫ້ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ). ແຜນງານ The Regional Fit for School ແມ່ນໄດ້ຮັບຜົນສຳເລັດຢູ່ປະເທດ ຟີລິບປິນ, ອິນໂດເນເຊຍ, ກຳປູເຈຍ ແລະ ສ.ປ.ປ ລາວ ມີການຮ່ວມມືກັບອົງການ ຊີເມວໂອອິນໂນເຕັກ (Southeast Asian Ministers of Education Organization Regional Center for Educational Innovation and Technology (SEAMEO INNOTECH)).ໂດຍໄດ້ຮັບທຶນສົມທົບລະຫວ່າງລັດຖະບານ ອົດສຕູາລີ ແລະ ເຢຍລະມັນ ແລະ ຍັງໄດ້ຈັ້ດຕັ້ງປະຕິບັດຢູ່ເຂດປົກຄອງຕົນເອງ ມຸສລິມ ມິນດານາວ ປະເທດ ຟີລິບປິນ.

ຂໍສະແດງຄວາມຂອບໃຈ:
ໂຄງການ GIZ Fit for School ຂໍສະແດງຄວາມຮູ້ບຸນຄຸນຕໍ່ກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະທີມງານສົ່ງເສີມສຸຂະພາບໃນໂຮງຮຽນ ກົມອະນຸບານ ແລະ ປະຖົມສຶກສາ, ກະຊວງສາທາລະນະສຸກ ແລະ ທຸກທ່ານທີ່ໄດ້ປະກອບສ່ວນດ້ານເນື້ອໃນ ແລະ ຄວາມຮູ້ ເຂົ້າໃນການຈັດພິມຄັ້ງນີ້:

ທ່ານ ດຣ ມີທອງ ສຸວັນວິໄຊ, ທ່ານ ນາງ ສຸດສາຍໃຈ ດວງສະຫວັນ, ທ່ານ ນາງ ຄຳຫວັນ ຣາດຊະຂັນຕິ, ທ່ານ ນາງ ໄພເລາະ ສັງທອງ, ທ່ານ ຄຳພິນ ໄຊຍະເພັດ, ທ່ານ ນາງ ແສງກະສັນ ສຸວັນນະລິທອງ, ທ່ານ ນາງ ດາລາວັນ ອຸດົມ, ທ່ານ ນາງ ຄຳໄຫຼ ລາດຊະວົງ, ທ່ານ ຄຳສິງ ໄຊຍະວົງ, ທ່ານ ນາງ ບຸນເນົາ ສີຫາລາດ, ທ່ານ ນາງ ຄຳພັນ ທຸມມະລາດ, ທ່ານ ນາງ ສຸກປະເສີດ ສຸພັນທອງ, ທ່ານ ນາງ ນິລະດາ ວິລະຖາວອນ, ທ່ານ ນາງ ບຸນທະວີ ໄຊຍະເສນ, ທ່ານ ນາງ ອ້ວນ ສີອຸບົນ , ທ່ານ ນາງ ຄູນລີໄລ ດວງບຸບພາ, ທ່ານ ສົມໄຊ ປັນແກ້ວ, ທ່ານ ໂອເລ ໂສແສງ, ທ່ານ ນາງ ຄຳທະລີ ວົງພະຈັນ, ທ່ານ ນາງ ບົວເງິນ ຫານຊະນະ, ທ່ານ ນາງ ຈັນຜີວ ສົມໂນໄຊ , ທ່ານ ຟີລິບ ເປີເນວ, ທ່ານ ນາງ ໂຍລານດາ ດີ ລາດສອາລັດ, ທ່ານ ນາງ ໂລແລນ ເນີຣິສ ບົວຕິສະຕາ, ທ່ານ ນາງ ນິໂກ ຊີກມູນ, ທ່ານ ອາເລັກຊານເດີ ວິນສຊາ, ທ່ານ ນາງ ບົວຈັນຈັນສົມ, ທ່ານ ນາງ ຣີຢາດ ກູະໂມ ໂຕເນຍໂອ, ແລະ ຄູອາຈານ, ນັກຮຽນ ແລະ ຜູ້ປົກຄອງນັກຮຽນໃນໂຮງຮຽນທີ່ໄດ້ລົງຢ້ຽມຢາມ.

ຮູບພາບ:
Ivan Sarenas, Christa Van Deth, Dorothea Tuch,
Dr. Bella Monse, Nicole Siegmund

ຕ້ອງການຂໍ້ມູນລາຍລະອຽດເພີ່ມເຕີມກ່ຽວກັບ GIZ Fit for School ແລະ ສິ່ງອຳນວຍຄວາມສະດວກໃນການລ້າງມືເປັນກຸ່ມ ກະລຸນາຕິດຕໍ່ ທ່ານ ນາງ ນິໂກ ຊີກມູນ (nicole.siegmund@giz.de)

ມີນາ 2016

ຄຳປະຕິເສດ:
ການຈັດພິມນີ້ແມ່ນມີຈຸດປະສົງເພື່ອແຈກຢາຍລ້າ ແລະບໍ່ອະນຸຍາດຜະລິດຄືນໃໝ່ເພື່ອເປັນສິນຄ້າ. ອົງການ GIZສົ່ງເສີມໃຫ້ມີການແຈກຢາຍໃນໂຮງຮຽນ ແລະ ຊຸມຊົນ; ການລອກແບບບົດລາຍງານ ແລະ ກ່າຍບາງເນື້ອໃນເພື່ອຈຸດປະສົງສ່ວນບຸກຄົນ ຫຼື ເພື່ອການສຶກສາ ແມ່ນບໍ່ມີການເກືອດຫ້າມ ແຕ່ຕ້ອງມີການອ້າງອີງບ່ອນທີ່ມາຂອງຂໍ້ມູນ. ການຮ້ອງຂໍສຳລັບການຈັດພິມຄືນໃໝ່ ແລະ ຂໍ້ສະເໜີອື່ນໆ ແມ່ນໃຫ້ຕິດຕໍ່ໄປທີ່ຫ້ອງການ GIZ Fit for School, ມະນິລາ ປະເທດຟີລິບປິນ.

ISBN 978-3-95645-789-0



www.fitforschool.international